# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຽງຂອງສະພາແຫ່ງຊາດ

ສຳນັກງານຕັ້ງຢູ່ອາລານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

16-23 ສິງຫາ 2024

ປີທີ 13

ສະບັບທີ 982

ລາຍສັປະດາ


## ຕິລາຄາຜົນການປະເມີນການປະຕິບັດລັດຖະທຳມະນູນ ສະບັບປີ 2015



(ສພຊ) - ກອງປະຊຸມຄັ້ງທີ 1 ຂອງຄະນະປະຈຳການ ຄະນະກຳມະການລະດັບຊາດປັບປຸງລັດຖະທຳມະນູນ ແຫ່ງ ສປປ ລາວ ສະບັບປີ 2015 (ຄລຊ) ໄດ້ດຳເນີນໃນຕອນເຊົ້າວັນທີ7 ສິງຫານີ້ ພາຍໃຕ້ການເປັນປະທານຂອງທ່ານປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ, ປະທານຄະນະກຳມະການລະດັບຊາດປັບປຸງລັດຖະທຳມະນູນ; ເຂົ້າຮ່ວມມີບັນດາທ່ານຮອງປະທານ ແລະ ກຳມະການ ຄລຊ, ຄະນະອະນຸກຳມະການຕ່າງໆ ແລະກອງເລຂາ.

ຈຸດປະສົງແມ່ນເພື່ອສະ

ອ່ານຕໍ່ໜ້າ 12




## ຄະນະປະຈຳສະພາແຫ່ງຊາດ ປະຊຸມປະຈຳເດືອນກໍລະກົດ 2024

(ສພຊ) - ກອງປະຊຸມຄະນະປະຈຳສະພາແຫ່ງຊາດປະຈຳເດືອນກໍລະກົດ ໄດ້ດຳເນີນໃນລະຫວ່າງວັນທີ 08-09 ສິງຫາ 2024 ໂດຍການເປັນປະທານຂອງທ່ານປອ. ໄຊສົມພອນ ພົມວິຫານກຳມະການກົມການເມືອງສູນກາງພັກ, ປະທານຄະນະປະຈຳສະພາແຫ່ງຊາດ; ມີບັນດາທ່ານຮອງປະທານ ແລະ ກຳມະການຄະນະປະຈຳສະພາແຫ່ງຊາດ, ບັນດາທ່ານລັດຖະມົນຕີ ແລະຮອງລັດຖະມົນຕີກະຊວງ, ອົງການທີ່ກ່ຽວຂ້ອງ ເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມໄດ້ຮັບຟັງການລາຍງານ ແລະ ປະກອບຄຳເຫັນຕໍ່ຜົນສຳເລັດການຮຽບຮຽງກົດໝາຍ ຈຳນວນ 10 ສະບັບທີ່ຜ່ານການພິຈາລະນາຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດຊຸດທີ IX ຄື: ກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ, ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ກົດໝາຍວ່າດ້ວຍການຕ້ານການ

ອ່ານຕໍ່ໜ້າ 8

## ກອງປະຊຸມປຶກສາຫາລືຂອງຄະນະສະມາຊິກ ລັດຖະສະພາໜຸ່ມໄອປາ ຄັ້ງທີ 1



(ສພຊ) - ວັນທີ 5 ສິງຫາ 2024 ທີ່ສະພາແຫ່ງຊາດ ໄດ້ມີກອງປະຊຸມປຶກສາຫາລືຂອງຄະນະສະມາຊິກລັດຖະສະພາໜຸ່ມໄອປາ (Young ParliamentariansofAIPA-YPA) ຄັ້ງທີ 1 ໃນຮູບແບບທາງໄກ ໂດຍການເປັນປະທານຮ່ວມໃນພິທີເປີດຂອງທ່ານປອ. ນາງ ສູນທອນ ໄຊຍະຈັກ ຮອງ

ອ່ານຕໍ່ໜ້າ 8

## ແລກປ່ຽນຄຳເຫັນໂຄງສ້າງລັດຖະທຳມະນູນສະບັບປັບປຸງໃໝ່



(ສພຊ) - ເພື່ອເປັນເອກະພາບກະກຽມໃຫ້ແກ່ກອງປະຊຸມຄົບຄະນະກຳມະການລະດັບຊາດປັບປຸງລັດຖະທຳມະນູນ ສະບັບປີ 2015 (ຄລຊ) ໃນທ້າຍເດືອນສິງຫານີ້; ຕອນບ່າຍວັນທີ 12 ສິງຫາ 2024 ທີ່ສະພາແຫ່ງຊາດ (ສພຊ) ໄດ້ມີກອງປະຊຸມແລກປ່ຽນຄວາມເຫັນກ່ຽວກັບໂຄງສ້າງລັດຖະທຳມະນູນສະບັບປັບປຸງໃໝ່ ໂດຍການເປັນປະທານຂອງທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ຮອງປະທານສະພາແຫ່ງຊາດ, ຮອງປະທານ ຜູ້ປະຈຳການຄະນະກຳມະການລະດັບຊາດປັບປຸງລັດຖະທຳມະນູນ; ມີບັນດາທ່ານກຳມະການ ຄລຊ, ຄະນະອະນຸກຳມະການຕ່າງໆ ແລະ ກອງເລຂາພ້ອມດ້ວຍຊ່ຽວຊານ, ພະນັກງານອາວຸໂສບຳນານຂອງ

ອ່ານຕໍ່ໜ້າ 2

## ກອງປະຊຸມສະພາທີ່ປຶກສາໄອປາ ກ່ຽວກັບ ໄພອັນຕະລາຍຂອງຢາເສບຕິດ ຄັ້ງທີ 7



(ສພຊ) - ເພື່ອປະຕິບັດແນວທາງການຕ່າງປະເທດສັນຕິພາບ, ເອກະລາດ, ມິດຕະພາບ ແລະ ການຮ່ວມມືເພື່ອການພັດທະນາ, ຮັດແໜ້ນຄວາມສາມັກຄີລະຫວ່າງ ສປປ ລາວ ກັບບັນດາປະເທດໃນພາກພື້ນ ແລະ ສາກົນ; ກອງປະຊຸມສະພາທີ່ປຶກສາໄອປາກ່ຽວກັບໄພອັນຕະລາຍຂອງຢາເສບຕິດ (AIPA Advisory Council on Dangerous Drugs - AIPACODD) ຄັ້ງທີ7 ພາຍໃຕ້ຫົວຂໍ້ "ເພີ່ມທະວີບົດບາດຂອງລັດຖະສະພາ ໃນການຮ່ວມມືເພື່ອແກ້ໄຂບັນຫາຢາເສບຕິດຢ່າງເປັນຮູບປະທຳ" (Strengthening

ອ່ານຕໍ່ໜ້າ 12

## ເຝິກອົບຮົມການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ, ສັງຄົມ ແລະ ທຳມະຊາດ ຕິດພັນກັບການພັດທະນາໂຄງການ



(ສພຊ) - ກອງປະຊຸມເຝິກອົບຮົມສ້າງຄວາມເຂັ້ມແຂງໃຫ້ແກ່ສະມາຊິກສະພາແຫ່ງຊາດ (ສສຊ) ທີ່ເປັນກຳມະການຂອງກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ (ກສຕສ), ສະມາຊິກສະພາປະຊາຊົນຂັ້ນແຂວງ (ສສຂ) ໃນຂົງເຂດເສດຖະກິດ ແລະ ວິຊາການຊ່ວຍວຽກຂອງກຳມາທິການ ກສຕສ, ເສນາທິການຊ່ວຍວຽກຂອງຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ ຂອງສະພາປະຊາຊົນຂັ້ນແຂວງ (ສພຂ) 11

ອ່ານຕໍ່ໜ້າ 8




ເຫຼົາລູກໜ້າເຕັມ (ໜ້າ 9)



ສະພາແຫ່ງຊາດ... (ໜ້າ 11)




ຂ່າວໜ້າເສັບໃຈ... (ໜ້າ 12)


**ຊົມເຊີຍວັນລັດຖະທຳມະນູນແຫ່ງຊາດ ຄົບຮອບ 33 ປີ (15 ສິງຫາ 1991 - 15 ສິງຫາ 2024) ຢ່າງສຸດໃຈ!**

# ປະທານສະພາແຫ່ງຊາດ ຮັບການເຂົ້າຢ້ຽມຂໍ່ານັບຂອງເລຂາທິການໃຫຍ່ AIPA



(ສພຊ) - ວັນທີ 5 ສິງຫາ 2024 ທີ່ສະພາແຫ່ງຊາດ, ທ່ານປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງທ່ານ ນາງ ຊິຕິ ໂຣໄຊເມຣີຢັນຕີ ດາໂຕະ ຮາຈິ ອັບດຸນ ຣາມັນ (Siti Rozaimeriyanty Dato Haji Abdul Rahman) ເລຂາທິການໃຫຍ່ໄອປາ (AIPA) ໃນໂອກາດເດີນທາງມາເຂົ້າຮ່ວມກອງປະຊຸມປຶກສາຫາລືຂອງຄະນະສະມາຊິກລັດຖະສະພາໜຸ່ມໄອປາ (Young Parliamentarians of AIPA - YPA) ຄັ້ງທີ 1 ແລະ ກອງປະຊຸມສະພາທີ່ປຶກສາໄອປາ ກ່ຽວກັບໄພອັນຕະລາຍຂອງຢາເສບຕິດ (AIPA Advisory Council on Dangerous Drugs - AIPACODD) ຄັ້ງທີ 7 ຢູ່ ສປປ ລາວ.

ທ່ານ ປອ. ໄຊສົມພອນ ພົມວິຫານ ໄດ້ສະແດງຄວາມຍິນດີຕ້ອນຮັບ ແລະ ຕີລາຄາສູງຕໍ່ການເດີນທາງມາເຮັດວຽກໃນຄັ້ງນີ້ ເຊິ່ງເປັນການປະກອບສ່ວນອັນສຳຄັນໃນການເປັນເຈົ້າພາບຈັດກອງປະຊຸມປຶກສາຫາລືຂອງຄະນະສະມາຊິກລັດຖະສະພາໜຸ່ມໄອປາ ຄັ້ງທີ 1 ໃນຮູບແບບທາງໄກ ທີ່ຫາກໍສຳເລັດ ແລະ ການເປັນເຈົ້າພາບຈັດກອງປະຊຸມ ສະພາທີ່ປຶກສາໄອປາ ກ່ຽວກັບໄພອັນຕະລາຍຂອງຢາເສບຕິດ ຄັ້ງທີ 7 ທີ່ຈະໄຂຂຶ້ນທີ່ແຂວງຫຼວງພະບາງ ໃນວັນທີ 7 ສິງຫານີ້ ທັງເຊື່ອໝັ້ນວ່າການພົບປະເຮັດວຽກກັບບັນດາປະທານກອງປະຊຸມກຳມາທິການປະຈຳວຽກງານຕ່າງໆຂອງໄອປາ ຈະເປັນການກະກຽມທີ່ດີໃຫ້ແກ່ການເປັນເຈົ້າພາບຈັດກອງປະຊຸມໃຫຍ່ໄອປາ ຄັ້ງທີ 45 ເຊິ່ງຈະຈັດຂຶ້ນທີ່ນະຄອນຫຼວງວຽງຈັນ ໃນລະຫວ່າງວັນທີ 17-23 ຕຸລາ 2024, ສະແດງຄວາມຊົມເຊີຍຕໍ່ທ່ານເລຂາທິການໃຫຍ່ໄອປາ ທີ່ໄດ້ເອົາໃຈໃສ່ເສີມຂະຫຍາຍການຮ່ວມມືກັບລັດຖະສະພາສັງເກດການ ແລະ ຄູ່ຮ່ວມພັດທະນາອື່ນໆ ເພື່ອຍາດແຍ່ງເອົາທຶນຮອນ ແລະ ຄວາມຮູ້ປະສົບການທີ່ດີມາຖ່າຍທອດໃຫ້ແກ່ສະມາຊິກລັດຖະສະພາໄອປາ ໂດຍຜ່ານການເຝິກອົບຮົມສຳມະນາໃນຮູບແບບຕ່າງໆຢ່າງຕໍ່ເນື່ອງ ເຊິ່ງສະພາແຫ່ງຊາດລາວກໍໄດ້ຮັບຜົນປະໂຫຍດຢ່າງຫຼວງຫຼາຍໃນການຍົກລະດັບຂີດຄວາມສາມາດໃຫ້ແກ່ສະມາຊິກສະພາແຫ່ງຊາດ ແລະ ພະນັກງານວິຊາການຂອງສະພາແຫ່ງຊາດ; ພ້ອມນັ້ນ, ທ່ານຍັງໄດ້ລາຍງານໃຫ້ເລຂາທິການໃຫຍ່ໄອປາຮັບຊາບກ່ຽວກັບການກະກຽມຢ່າງຂຸ້ນຂ້ຽວໃນການຮ່າງຕາຕະລາງການດຳເນີນການ ແລະ ບັດເຊີນກອງປະຊຸມ, ຮ່າງມະຕິ ແລະ ເນື້ອໃນເອກະສານກ່ຽວຂ້ອງອື່ນໆໃນກອງປະຊຸມໄອປາ ຄັ້ງທີ 45 ເຊິ່ງຄາດວ່າຈະໃຫ້ສຳເລັດໃນທ້າຍອາທິດທີໜຶ່ງຂອງເດືອນສິງຫານີ້.

ທ່ານ ນາງ ຊິຕິ ໂຣໄຊເມຣີຢັນຕີ ດາໂຕະ ຮາຈິ ອັບດຸນ ຣາມັນ ໄດ້ລາຍງານຜົນສຳເລັດກອງປະຊຸມປຶກສາຫາລືຂອງຄະນະສະມາຊິກລັດຖະສະພາໜຸ່ມໄອປາ ຄັ້ງທີ 1 ທີ່ຈັດຂຶ້ນໃນຕອນເຊົ້າທີ່ຜ່ານມາ ພາຍໃຕ້ຫົວຂໍ້ "ສ້າງຄວາມເຂັ້ມແຂງໃຫ້ແກ່ຊາວໜຸ່ມໃນການສ້າງປະຊາຄົມອາຊຽນທີ່ປອດໄພ, ເຂັ້ມແຂງ ແລະ ກວມລວມ" ເຊິ່ງເປັນການສົ່ງເສີມໃຫ້ຊາວໜຸ່ມໄດ້ມີສ່ວນຮ່ວມໃນການສ້າງປະຊາຄົມອາຊຽນໃຫ້ຫຼາຍຂຶ້ນແລະແຈ້ງໃຫ້ຊາບກ່ຽວກັບກອງປະຊຸມສະພາທີ່ປຶກສາໄອປາ ກ່ຽວກັບໄພອັນຕະລາຍຂອງຢາເສບຕິດ ຄັ້ງທີ 7 ທີ່ແຂວງຫຼວງພະບາງ ໃນວັນທີ 7-9 ສິງຫານີ້ ພາຍໃຕ້ຫົວຂໍ້: "ເພີ່ມທະວີບົດບາດຂອງລັດຖະສະພາ ໃນການຮ່ວມມືເພື່ອແກ້ໄຂບັນຫາຢາເສບຕິດ ເຮັດໃຫ້ອາຊຽນປອດຢາເສບຕິດຢ່າງເປັນຮູບປະທຳ".

**(ນາງ ອາລິນ ສຸພົມມະປະດິດ)**



# ໜ່ວຍແມ່ຍິງກົມຈັດຕັ້ງ-ພະນັກງານ ຕີລາຄາການປະຕິບັດວຽກງານ



(ສພຊ) - ກອງປະຊຸມສະຫຼຸບຕີລາຄາການຈັດຕັ້ງປະຕິບັດວຽກງານໄລຍະຜ່ານມາຂອງໜ່ວຍແມ່ຍິງກົມຈັດຕັ້ງ-ພະນັກງານ ໄດ້ດຳເນີນຢ່າງເປັນທາງການໃນວັນຈັນທີ 5 ສິງຫາ 2024 ພາຍໃຕ້ການເປັນປະທານຮ່ວມຂອງສະຫາຍ ປອ. ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງເລຂາຄະນະບໍລິຫານງານພັກສະພາແຫ່ງຊາດ, ສະຫາຍ ແສງແກ້ວ ວົງນະລາດ ຄະນະພັກຮາກຖານຄະນະເລຂາທິການສະພາແຫ່ງຊາດ (ຄລສ), ເລຂາໜ່ວຍພັກກົມຈັດຕັ້ງ-ພະນັກງານແລະສະຫາຍ ນາງ ເພັດສາຄອນ ອຸ່ນມີໄຊຫົວໜ້າໜ່ວຍແມ່ຍິງກົມຈັດຕັ້ງ-ພະນັກງານ; ມີສະຫາຍ ນາງ ອຸດນາລີ ໄຊຍະສັກ ຄະນະບໍລິຫານງານສະຫະພັນແມ່ຍິງສະພາແຫ່ງຊາດ ພ້ອມດ້ວຍຕາງໜ້າອົງການຈັດຕັ້ງມະຫາຊົນພາຍໃນກົມ, ບັນດາສະຫາຍຄະນະໜ່ວຍແມ່ຍິງທີ່ຂຶ້ນກັບ ຄລສ, ສະມາຊິກແມ່ຍິງພາຍໃນໜ່ວຍ ແລະ ແຂກຖືກເຊີນ.

ສະມາຊິກແມ່ຍິງພາຍໃນໜ່ວຍ 8 ສະຫາຍ ໄດ້ເອກະພາບກັນຢ່າງສູງ ໃນການພິຈາລະນາ ແລະ ຮັບຮອງເອົາບັນດາເນື້ອໃນສຳຄັນຄື: ບົດສະຫຼຸບການເຄື່ອນໄຫວວຽກງານໄລຍະຜ່ານມາ (2018-2024) ແລະ ທິດທາງແຜນການ 5 ປີຕໍ່ໜ້າຂອງໜ່ວຍແມ່ຍິງກົມຈັດຕັ້ງ-ພະນັກງານ, ບົດສະຫຼຸບ 5 ປີຂອງຄະນະໜ່ວຍແມ່ຍິງກົມຈັດຕັ້ງ-ພະນັກງານ; ພ້ອມນັ້ນ, ກອງປະຊຸມຍັງໄດ້ຜ່ານຂໍ້ຕົກລົງຮັບຮອງເອົາການແຕ່ງຕັ້ງຄະນະໜ່ວຍແມ່ຍິງກົມຈັດຕັ້ງ-ພະນັກງານຊຸດໃໝ່ ໂດຍແຕ່ງຕັ້ງສະຫາຍ ນາງ ເພັດສາຄອນ ອຸ່ນມີໄຊ ເປັນຫົວໜ້າ ແລະ ສະຫາຍ ນາງ ມ້ອຍ ແສນແກ້ວດວງຕາ ເປັນຮອງຫົວໜ້າ.

ໃນໂອກາດນີ້, ສະຫາຍ ປອ. ນາງ ສູນທອນ ໄຊຍະຈັກ ມີຄຳເຫັນໂອ້ລົມຕໍ່ກອງປະຊຸມ ເຊິ່ງໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຜົນງານຂອງໜ່ວຍແມ່ຍິງກົມຈັດຕັ້ງ-ພະນັກງານໃນໄລຍະຜ່ານມາ ແລະ ມີຄຳເຫັນເນັ້ນໜັກໃຫ້ຄະນະໜ່ວຍ ພ້ອມດ້ວຍສະມາຊິກທຸກສະຫາຍ ສືບຕໍ່ເສີມຂະຫຍາຍດ້ານດີ, ປະຕິບັດຕາມມະຕິ, ຄຳສັ່ງ, ກົດລະບຽບຕ່າງໆທີ່ສະຫະພັນແມ່ຍິງລາວວາງອອກຢ່າງມີປະສິດທິຜົນສູງ; ເອົາໃຈໃສ່ເຕົ້າໂຮມຄວາມສາມັກຄີ, ເຂົ້າຮ່ວມຂະບວນການຂອງອົງການຈັດຕັ້ງຢ່າງເປັນເຈົ້າການ; ດຳເນີນຊີວິດການເມືອງເປັນປົກກະຕິ ໂດຍຖືເອົາການຕຳນິຕິຊົມຕົນເອງ, ການຕິຊົມເຊິ່ງກັນແລະກັນ ເປັນປັດໄຈສຳຄັນ; ຕັ້ງໜ້າເຄື່ອນໄຫວປະຕິບັດຂໍ້ແຂ່ງຂັນ 3 ດີ ຂອງແມ່ຍິງລາວ ຕິດພັນກັບຂໍ້ແຂ່ງຂັນ "ຮັກຊາດ ແລະ ພັດທະນາ" ໃຫ້ສາມາດຍາດໄດ້ຜົນງານທີ່ດີເດັ່ນຂຶ້ນກວ່າເກົ່າ; ພ້ອມກັນນັ້ນ, ກໍຕ້ອງເອົາໃຈໃສ່ປະຕິບັດເນື້ອໃນຂໍ້ແຂ່ງຂັນ 3 ດີຂອງແມ່ຍິງລາວ ໃຫ້ເປັນຂະບວນຟົດຟື້ນ, ເຮັດລ້ອນໜ້າທີ່ເປັນເສນາທິການໃຫ້ແກ່ການນຳ ກົມຈັດຕັ້ງ-ພະນັກງານ ໃຫ້ມີໝາກຜົນສຳເລັດອັນຈົບງາມ.

**(ຂ່າວ: ນາງປາກາລັກ ພົມມີໄຊ, ພາບ: ອານຸສອນ ພູມມີທອນ)**

## ແລກປ່ຽນ...

(ຕໍ່ຈາກໜ້າ 1)

ສພຊ ເຂົ້າຮ່ວມຢ່າງພ້ອມພຽງ.

ທ່ານ ສຈ. ປອ. ຈະເລີນ ເຍຍປາວເຮີ ໄດ້ລາຍງານໃຫ້ຮູ້ວ່າ: ເລີ່ມແຕ່ວັນທີ 20 ມິຖຸນາ ຫາ 30 ກໍລະກົດ 2024 ຄະນະກຳມະການລະດັບຊາດປັບປຸງລັດຖະທຳມະນູນ ໄດ້ດຳເນີນກອງປະຊຸມປະເມີນຜົນການຈັດຕັ້ງປະຕິບັດລັດຖະທຳມະນູນ ສະບັບປີ 2015 ໃນຂອບເຂດທົ່ວປະເທດ ເຊິ່ງມີພະນັກງານນຳພາ-ຄຸ້ມຄອງຂັ້ນກະຊວງ-ອົງການຂັ້ນສູນກາງ, ແຂວງ-ນະຄອນຫຼວງ ແລະ ຂັ້ນເມືອງ ເຂົ້າຮ່ວມຈຳນວນ 11,567 ທ່ານ ຍິງ 2,011 ທ່ານ ເຊິ່ງເປັນຄັ້ງທຳອິດໃນການປະເມີນຜົນການຈັດຕັ້ງປະຕິບັດລັດຖະທຳມະນູນທີ່ມີພະນັກງານນຳພາ-ຄຸ້ມຄອງເຂົ້າຮ່ວມຢ່າງຫຼວງຫຼາຍ; ນອກຈາກການປະກອບຄຳເຫັນຕີລາຄາການຈັດຕັ້ງປະຕິບັດລັດຖະທຳມະນູນ ສະບັບປີ 2015 ຢູ່ແຕ່ລະຂົງເຂດ ແຕ່ລະທ້ອງຖິ່ນແລ້ວ, ຜູ້ເຂົ້າຮ່ວມຍັງໄດ້ສະເໜີຄຳເຫັນຫຼາກຫຼາຍຕໍ່ການປັບປຸງເນື້ອໃນຂອງລັດຖະທຳມະນູນ ສະບັບປີ 2015 ໃນນີ້, ມີຄຳເຫັນສະເໜີໃຫ້ປັບປຸງສັບຊ້ອນຄືນໂຄງສ້າງຂອງລັດຖະທຳມະນູນ ໃຫ້ເປັນລະບົບໂລຊິກແລະວິທະຍາສາດກວ່າເກົ່າ.

ໃນກອງປະຊຸມ, ໄດ້ຮັບຟັງບົດສະເໜີໂຄງຮ່າງ, ໂຄງສ້າງຂອງລັດຖະທຳມະນູນສະບັບປັບປຸງ ໂດຍທ່ານ ປອ. ກອງແກ້ວ ໄຊສົງຄາມ ຫົວໜ້າສະຖາບັນວິທະຍາສາດເສດຖະກິດ ແລະ ສັງຄົມແຫ່ງຊາດ, ຄະນະກຳມະການລະດັບຊາດປັບປຸງລັດຖະທຳມະນູນ ທັງເປັນຮອງຫົວໜ້າອະນຸກຳມະການເນື້ອໃນ; ພ້ອມນັ້ນ, ຍັງໄດ້ຮັບຟັງການສະເໜີບົດຮຽນການປັບປຸງລັດຖະທຳມະນູນຂອງຕ່າງປະເທດ ເປັນຕົ້ນ ສປຈີນ, ສ.ຣັດເຊຍ, ສປປ ເກົາຫຼີ, ລາຊະອານາຈັກໄທ... ຫຼັງຈາກນັ້ນ, ຜູ້ເຂົ້າຮ່ວມກໍໄດ້ຄົ້ນຄວ້າແລະປະກອບຄຳເຫັນທີ່ເປັນປະໂຫຍດຕໍ່ໂຄງສ້າງລັດຖະທຳມະນູນສະບັບປັບປຸງໃໝ່.

**(ນາງ ອາລິນ ສຸພົມມະປະດິດ)**

# ຕິດຕາມກວດກາການປະຕິບັດມະຕິ ຄປຈສພຊ, ນິຕິກຳ ທີ່ຕິດພັນກັບການຮັກສາສະຖຽນລະພາບນ້ຳມັນເຊື້ອໄຟ



(ສພຊ) - ວັນທີ 1-4 ສິງຫາຜ່ານມາ, ທ່ານ ນາງ ປິ່ງຄຳ ລາຊະສິມມາ ປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ (ກສຕສ) ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຕິດຕາມກວດກາການປະຕິບັດນະໂຍບາຍ, ນິຕິກຳທີ່ຕິດພັນກັບການນຳເຂົ້າ, ປຸງແຕ່ງນ້ຳມັນເຊື້ອໄຟ ເພື່ອສະໜອງການຊົມໃຊ້ພາຍໃນ ຢູ່ເມືອງແປກ ແຂວງຊຽງຂວາງ.

ໂອກາດນີ້, ທ່ານປະທານ ກສຕສ ພ້ອມດ້ວຍຄະນະ ໄດ້ເຂົ້າພົບທ່ານເຈົ້າແຂວງໆຊຽງຂວາງ ເພື່ອລາຍງານຈຸດປະສົງໃນການເຄື່ອນໄຫວວຽກງານ ແລະ ຮ່ວມເຮັດວຽກກັບສະພາປະຊາຊົນແຂວງຊຽງຂວາງ ໂດຍໄດ້ຈັດກອງປະຊຸມຮ່ວມກັບບັນດາພະແນກການ, ຂະແໜງການທີ່ກ່ຽວຂ້ອງຂອງແຂວງ ພາຍໃຕ້ການເປັນປະທານຂອງທ່ານ ນາງ ປິ່ງຄຳ ລາຊະສິມມາ ເຊິ່ງໄດ້ຮັບຟັງການລາຍງານການຈັດຕັ້ງປະຕິບັດນະໂຍບາຍ ແລະ ນິຕິກຳທີ່ຕິດພັນກັບການນຳເຂົ້າ, ປຸງແຕ່ງນ້ຳມັນເຊື້ອໄຟ ເພື່ອສະໜອງການຊົມໃຊ້ພາຍໃນ ພ້ອມທັງສະພາບຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກ ໃນການຈັດຕັ້ງປະຕິບັດມະຕິຂອງຄະນະປະຈຳສະພາແຫ່ງຊາດ (ຄປຈສພຊ), ນິຕິກຳທີ່ຕິດພັນກັບການຮັກສາສະຖຽນລະພາບຂອງລາຄານ້ຳມັນເຊື້ອໄຟ ແລະ ການຫຼຸດອັດຕາພາສີຂາເຂົ້ານ້ຳມັນເຊື້ອໄຟ, ນ້ຳມັນແນຟຕາ (Naphtha) ເພື່ອນຳໃຊ້ເຂົ້າໃນການປະສົມ ແລະ ປຸງແຕ່ງນ້ຳມັນແອັດຊັງທຳມະດາຂອງບໍລິສັດ ຍອດງື່ມ ພາວເວີມະຫາຊົນ ໂດຍສະເພາະການຊຸກຍູ້ສົ່ງເສີມແລະຄຸ້ມຄອງການນຳເຂົ້າ ຮັບປະກັນສະຖຽນລະພາບໃນການສະໜອງນ້ຳມັນເຊື້ອໄຟໃຫ້ມີຄວາມພຽງພໍ ແລະ ຕໍ່ເນື່ອງໃນຕໍ່ໜ້າ ແລະ ໄລຍະຍາວ, ຫຼີກລ່ຽງຄວາມສ່ຽງທີ່ຈະເກີດສະພາບຂາດແຄນນ້ຳມັນເຊື້ອໄຟ ພ້ອມທັງຊຸກຍູ້ການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການປົກປ້ອງຜູ້ຊົມໃຊ້ ຮັບປະກັນບໍ່ໃຫ້ນ້ຳມັນເຊື້ອໄຟມີການເໜັງຕີງສູງ ແລະ ມີສະຖຽນລະພາບທາງດ້ານລາຄາ; ຫຼັງຈາກນັ້ນ, ໄດ້ແລກປ່ຽນຄຳຄິດຄຳເຫັນຢ່າງກົງໄປກົງມາ ເພື່ອຊອກໃຫ້ເຫັນດ້ານດີທີ່ຄວນເສີມຂະຫຍາຍ ແລະ ດ້ານຂໍ້ຄົງຄ້າງທີ່ຕ້ອງໄດ້ຊອກຫາວິທີແກ້ໄຂ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ມີຄວາມຖືກຕ້ອງ, ສອດຄ່ອງກັບກົດໝາຍ ແລະ ບັນລຸຕາມຄາດໝາຍທີ່ວາງໄວ້. ໃນຕອນທ້າຍກອງປະຊຸມ, ທ່ານປະທານໄດ້ມີຄຳເຫັນຊີ້ນຳແຕ່ລະຂະແໜງການ ຈົ່ງເພີ່ມທະວີແລະເອົາໃຈໃສ່ຕິດຕາມກວດກາການຈັດຕັ້ງປະຕິບັດມະຕິຂອງ ຄປຈສພຊ ໃຫ້ມີປະສິດທິພາບ ແລະປະສິດທິຜົນກວ່າເກົ່າ ເປັນຕົ້ນແມ່ນການຄຸ້ມຄອງການນຳເຂົ້າ, ຈຳໜ່າຍນ້ຳມັນເຊື້ອໄຟ ແລະ ການປະຕິບັດພັນທະຕ່າງໆ; ຂະແໜງການກ່ຽວຂ້ອງຂອງແຂວງ ເອົາໃຈໃສ່ປະສານສົມທົບກັບຂັ້ນສູນກາງ ຄຸ້ມຄອງການນຳເຂົ້ານ້ຳມັນເຊື້ອໄຟ ແລະ ການສົ່ງເສີມການຜະລິດປຸງແຕ່ງນ້ຳມັນເຊື້ອໄຟ ເພື່ອເປັນການສະໜອງການຊົມໃຊ້ພາຍໃນ, ການສົ່ງເສີມປັດໄຈການຜະລິດແລະ ຫຼຸດຜ່ອນການນຳເຂົ້າ ເພື່ອຈັດຕັ້ງປະຕິບັດໃຫ້ສອດຄ່ອງກັບມະຕິຂອງຄະນະປະຈຳສະພາແຫ່ງຊາດ.

ນອກຈາກນີ້, ຄະນະຍັງໄດ້ໄປຢ້ຽມຊົມສະຖານທີ່ຕົວຈິງ ໂຮງງານປຸງແຕ່ງນ້ຳມັນເຊື້ອໄຟ ຂອງ ບໍລິສັດ ຍອດ ງື່ມ ພາວເວີ ມະຫາຊົນ ທີ່ຕັ້ງຢູ່ບ້ານຍອດງື່ມ.

# ສ້າງຄູຝຶກວຽກງານບໍລິຫານ ອົງກອນ ແລະ ບຸກຄະລາກອນ




(ສພຊ) - ກອງປະຊຸມເຝິກອົບຮົມການສ້າງເປັນຄູເຝິກວຽກງານການບໍລິຫານອົງກອນ ແລະບຸກຄະລາກອນ ໃຫ້ແກ່ພະນັກງານກົມຈັດຕັ້ງ-ພະນັກງານ, ຄະນະເລຂາທິການສະພາແຫ່ງຊາດ (ຄລສ) ໄດ້ຈັດຂຶ້ນໃນວັນທີ 02-04 ສິງຫານີ້ທີ່ເມືອງແກ້ວອຸດົມແຂວງວຽງຈັນ ໂດຍການເປັນປະທານຂອງທ່ານ ນາງ ອຳໄພວອນ ລ້ອມບຸນແພງ ເລຂາທິການສະພາແຫ່ງຊາດ ເຊິ່ງນັກເຝິກອົບຮົມໄດ້ຮັບຟັງການສະເໜີຫຼັກສູດການເປັນຄູເຝິກທັງໝົດ 3 ພາກ ຄື: ພາກທີ 1 ພື້ນຖານການເຝິກອົບຮົມ 10 ຫົວຂໍ້, ພາກທີ2 ການອອກແບບ ແລະ ການເຝິກອົບຮົມ 6 ຫົວຂໍ້ ແລະ ພາກທີ 3 ການທົດລອງເຝິກອົບຮົມຕົວຈິງ 2 ຫົວຂໍ້ ຈາກບັນດາອາຈານທີ່ມີຄວາມຊ່ຽວຊານທາງດ້ານການບໍລິຫານອົງກອນ ແລະ ບຸກຄະລາກອນຂອງກະຊວງພາຍໃນ.

ທັງນີ້, ກໍເພື່ອຍົກສູງບົດບາດ, ໜ້າທີ່ຮັບຜິດຊອບ, ຄວາມຮູ້ ແລະ ຄວາມສາມາດ ໃຫ້ແກ່ພະນັກງານ-ລັດຖະກອນຂອງກົມຈັດຕັ້ງ-ພະນັກງານ ແນໃສ່ປັບປຸງຄຸນນະພາບການເຄື່ອນໄຫວວຽກງານ ໂດຍສະເພາະການເປັນເສນາທິການໃຫ້ແກ່ ຄລສ ມີປະສິດທິພາບ ແລະ ປະສິດທິຜົນເພີ່ມຂຶ້ນ, ຮັບປະກັນຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດຕົວຈິງ ແລະ ສອດຄ່ອງຕາມລະບຽບຫຼັກການ; ຍົກສູງຄວາມຮູ້, ຮັດແໜ້ນຄວາມເຂົ້າໃຈແລະທັກສະດ້ານຕ່າງໆເພື່ອກະກຽມຄວາມພ້ອມໃນການເປັນຄູເຝິກວຽກງານການບໍລິຫານອົງກອນ ແລະ ການບໍລິຫານບຸກຄະລາກອນ ເຊິ່ງກວມເອົາບັນດາຫຼັກການພື້ນຖານ ແລະ ທັກສະຈຳເປັນໃນການເປັນຄູເຝິກ ລວມທັງການອອກແບບ, ການຈັດຕັ້ງປະຕິບັດແລະການປະເມີນການເຝິກອົບຮົມ ທັງເປັນການຖອດຖອນບົດຮຽນ ແລະ ສົນທະນາແລກປ່ຽນຄວາມຄິດເຫັນໃນຂະບວນການເຄື່ອນໄຫວວຽກງານຕົວຈິງສົມທຽບກັບທິດສະດີ.

ທ່ານ ນາງ ອຳໄພວອນ ລ້ອມບຸນແພງ ມີຄຳເຫັນວ່າ: ການສ້າງຫຼືພັດທະນາບຸກຄະລາກອນໃຫ້ກາຍເປັນຄູເຝິກ ຫຼື ເປັນຊ່ຽວຊານສະເພາະດ້ານເປັນປັດໄຈໜຶ່ງທີ່ສຳຄັນໃນການພັດທະນາອົງກອນ ກໍຄືຍົກສູງບົດບາດເພື່ອການຂັບເຄື່ອນວຽກງານລວມຂອງສະພາແຫ່ງຊາດໃຫ້ມີທ່າກ້າວທີ່ເຂັ້ມແຂງຂຶ້ນ, ເຊິ່ງກົມຈັດຕັ້ງ-ພະນັກງານ ແມ່ນກົງຈັກການຈັດຕັ້ງໜຶ່ງທີ່ມີບົດບາດສຳຄັນໃນການບຳລຸງກໍ່ສ້າງ ແລະ ພັດທະນາບຸກຄະລາກອນຂອງສະພາແຫ່ງຊາດໃຫ້ກາຍເປັນບຸກຄະລາກອນທີ່ມີຄຸນນະພາບແລະສາມາດປະກອບສ່ວນວຽກງານເຂົ້າໃນຂົງເຂດວິຊາສະເພາະຕ່າງໆໄດ້ຢ່າງມີປະສິດທິພາບ.

ບັນດານັກເຝິກອົບຮົມໄດ້ເອົາໃຈໃສ່ຕິດຕາມຮັບຟັງການສະເໜີ, ຄົ້ນຄວ້າ, ແລກປ່ຽນຄຳເຫັນຕໍ່ເນື້ອໃນຫົວຂໍ້ຕ່າງໆທີ່ວິທະຍາກອນນຳມາສະເໜີ ເພື່ອສາມາດເປັນຄູເຝິກທີ່ມີຄຸນນະພາບ ປະກອບສ່ວນເຮັດໃຫ້ວຽກງານບໍລິຫານອົງກອນ ແລະ ບຸກຄະລາກອນ ມີປະສິດທິພາບ, ປະສິດທິຜົນສູງຂຶ້ນ.

ກອງປະຊຸມເຝິກອົບຮົມຄັ້ງນີ້ ໄດ້ຮັບການສະໜັບສະໜູນຊ່ວຍເຫຼືອທາງດ້ານງົບປະມານຈາກໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດແລະສະພາປະຊາຊົນຂັ້ນແຂວງ ຫຼື ສະເຕັບສ໌ (STEPs) ໂດຍຜ່ານກອງເລຂາຄຸ້ມຄອງແຫຼ່ງທຶນຊ່ວຍເຫຼືອລ້າໃຫ້ແກ່ສະພາແຫ່ງຊາດສົມທົບກັບງົບປະມານຂອງຄະນະເລຂາທິການສະພາແຫ່ງຊາດ.

# ໜ່ວຍແມ່ຍິງຮາກຖານ ກຕທ ຕີລາຄາການປະຕິບັດວຽກງານ




(ສພຊ) - ກອງປະຊຸມສະຫຼຸບຕີລາຄາການຈັດຕັ້ງປະຕິບັດວຽກງານຂອງໜ່ວຍແມ່ຍິງຮາກຖານກຳມາທິການການຕ່າງປະເທດ (ກຕທ) ໄດ້ຈັດຂຶ້ນໃນວັນທີ 31 ກໍລະກົດ 2024 ໂດຍການຮ່ວມເປັນຄະນະປະທານຂອງສະຫາຍ ເພັດລາ ທັນທະວົງສາ ປະທານກວດກາໜ່ວຍພັກຮາກຖານກຳມາທິການການຕ່າງປະເທດ, ສະຫາຍ ນາງ ດາວເພັດ ສີຫາວົງ ຮອງປະທານສະຫະພັນແມ່ຍິງສະພາແຫ່ງຊາດ ແລະ ສະຫາຍ ນາງ ນິດແກ້ວ ຄຳມີ ຫົວໜ້າໜ່ວຍແມ່ຍິງຮາກຖານກຳມາທິການການຕ່າງປະເທດ, ມີຜູ້ຕາງໜ້າຈາກໜ່ວຍກຳມະບານຮາກຖານແລະໜ່ວຍຊາວໜຸ່ມຮາກຖານ ກຕທ ເຂົ້າຮ່ວມ; ຜູ້ແທນກອງປະຊຸມ 9 ສະຫາຍ ໄດ້ພ້ອມກັນຄົ້ນຄວ້າປະກອບຄຳຄິດຄຳເຫັນໃສ່ເນື້ອໃນບົດສະຫຼຸບການຈັດຕັ້ງປະຕິບັດວຽກງານຂອງໜ່ວຍແມ່ຍິງຮາກຖານກຳມາທິການການຕ່າງປະເທດ ແລະທິດທາງແຜນການເຄື່ອນໄຫວວຽກງານໃນຕໍ່ໜ້າ ໂດຍເປັນເອກະພາບກັນຮັບຮອງເອົາເນື້ອໃນບົດສະຫຼຸບ ເປັນຕົ້ນແມ່ນການຕີລາຄາຜົນງານດ້ານຕັ້ງໜ້າ, ດ້ານອ່ອນ-ຂໍ້ຄົງຄ້າງໃນການເຄື່ອນໄຫວວຽກງານໄລຍະ 5 ປີຜ່ານມາ, ພ້ອມທັງວາງທິດທາງແຜນການທີ່ຈະຕ້ອງຈັດຕັ້ງປະຕິບັດໃນ 5 ປີຕໍ່ໜ້າ.

ກອງປະຊຸມຍັງໄດ້ຜ່ານການຮັບຮອງເອົາມະຕິແຕ່ງຕັ້ງຄະນະໜ່ວຍແມ່ຍິງຮາກຖານກຳມາທິການການຕ່າງປະເທດຊຸດໃໝ່ ໂດຍອີງໃສ່ຜົນການທາບທາມພາຍໃນໜ່ວຍ ເຊິ່ງຮັບຮອງເອົາສະຫາຍ ນາງ ນິດແກ້ວ ຄຳມີ ເປັນຫົວໜ້າ, ສະຫາຍ ນາງ ສາລີພອນ ອຸດທະຈັກ ເປັນຮອງຫົວໜ້າ ແລະ ປະທານກວດກາ, ສະຫາຍ ນາງ ວິໄລພອນ ຄຳວົງສາ ເປັນຄະນະ.

ກອງປະຊຸມໄດ້ຮັບຟັງການໂອ້ລົມຈາກສະຫາຍເພັດລາ ທັນທະວົງສາ ເຊິ່ງໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຜົນງານຂອງຄະນະໜ່ວຍແມ່ຍິງຮາກຖານກຳມາທິການການຕ່າງປະເທດຊຸດຜ່ານມາ ແລະ ສະມາຊິກແມ່ຍິງທັງໝົດພາຍໃນໜ່ວຍທີ່ຍາດໄດ້ຜົນງານຫຼາຍໆດ້ານ, ສະແດງຄວາມເປັນຫ່ວງເປັນໄຍຕໍ່ດ້ານອ່ອນ-ຂໍ້ຄົງຄ້າງ ໂດຍຮຽກຮ້ອງຄະນະໜ່ວຍຊຸດໃໝ່ ຈະຕ້ອງສຸມໃສ່ປັບປຸງແກ້ໄຂໃຫ້ມີທິດທາງທີ່ຕັ້ງໜ້າກວ່າເກົ່າ; ພ້ອມທັງເຊື່ອໝັ້ນວ່າໃນຕໍ່ໜ້າ ຄະນະໜ່ວຍຈະສືບຕໍ່ຊີ້ນຳ-ນຳພາສະມາຊິກພາຍໃນໜ່ວຍ ຈັດຕັ້ງປະຕິບັດໜ້າທີ່ການເມືອງຂອງຕົນຕາມມະຕິກອງປະຊຸມຄັ້ງນີ້ ໃຫ້ຍາດໄດ້ຜົນງານ ແລະ ຜົນສຳເລັດໃໝ່ທີ່ຍິ່ງໃຫຍ່ກວ່າເກົ່າ.

ກອງປະຊຸມຮຽກຮ້ອງມາຍັງສະມາຊິກແມ່ຍິງພາຍໃນໜ່ວຍຈົ່ງເຊີດຊູສະຕິປັນຍາແລະຄວາມຮັບຜິດຊອບ ເພື່ອພ້ອມກັນກັບຄະນະໜ່ວຍ ເຮັດຫຼ້ອນໜ້າທີ່ການເມືອງຂອງຕົນໃຫ້ສູງຂຶ້ນຢ່າງບໍ່ຢຸດຢັ້ງ.

**(ນາງ ອາລິນ ສຸພົມມະປະກິດ)**

# ຄະນະຜູ້ແທນສະພາແຫ່ງຊາດ ປຶກສາຫາລືກັບເລຂາທິການໃຫຍ່ໄອປາ




(ສພຊ) - ເພື່ອເປັນການກະກຽມໃຫ້ແກ່ການເປັນເຈົ້າພາບກອງປະຊຸມໃຫຍ່ໄອປາຄັ້ງທີ 45 ທີ່ຈະຈັດຂຶ້ນທີ່ ນະຄອນຫຼວງວຽງຈັນ ລະຫວ່າງວັນທີ 17-23 ຕຸລາທີ່ຈະມາເຖິງນີ້ ດຳເນີນໄປຕາມກຳນົດເວລາ ແລະ ບັນລຸຜົນສຳເລັດ; ວັນທີ 09 ສິງຫາ 2024 ທີ່ສະພາແຫ່ງຊາດ, ທ່ານ ສັນຍາ ປຣະເສີດ ປະທານກຳມາທິການການຕ່າງປະເທດ ໄດ້ນຳພາຄະນະປະທານກອງປະຊຸມກຳມາທິການປະຈຳໄອປາ, ຫົວໜ້າຄະນະຜູ້ແທນລາວ ແລະ ຜູ້ບັນທຶກລາຍງານຂອງກອງປະຊຸມກຳມາທິການປະຈຳຕ່າງໆ ຂອງໄອປາ ພົບປະເຮັດວຽກ ແລະ ປຶກສາຫາລືກັບທ່ານ ນາງ ຊິຕິ ໂຣໄຊເມຣີຢັນຕີ ດາໂຕະ ຮາຈິ ອັບດຸນ ຣາມັນ ເລຂາທິການໃຫຍ່ໄອປາ ພ້ອມດ້ວຍຄະນະ.

ທ່ານ ສັນຍາ ປຣະເສີດ ໄດ້ແຈ້ງໃຫ້ຊາບຜົນສຳເລັດການກຳນົດຫົວຂໍ້ ແລະ ຮ່າງບັນທຶກແນວຄວາມຄິດ (Concept Notes) ຂອງກອງປະຊຸມສະມັດຊາໃຫຍ່ໄອປາ-45 ແລະ ກອງປະຊຸມປີ່ນອ້ອມຕ່າງໆລວມທັງໄດ້ກະກຽມຮ່າງມະຕິໃນນາມສະພາແຫ່ງຊາດລາວ ທີ່ຈະສະເໜີເຂົ້າພິຈາລະນາໃນກອງປະຊຸມກຳມາທິການວຽກງານຕ່າງໆ ຂອງໄອປາ 45 ຈຳນວນ 9 ຮ່າງມະຕິ;ປັດຈຸບັນ,ພວມດຳເນີນການຮ່າງຕາຕະລາງການເຄື່ອນໄຫວ ແລະ ບັດເຊີນເຂົ້າຮ່ວມກອງປະຊຸມໃຫຍ່ໄອປາ-45 ລວມທັງປະສານງານໃນການສ້າງຕາຕະລາງການເຄື່ອນໄຫວຂອງກອງປະຊຸມພົບປະລະຫວ່າງຜູ້ນຳໄອປາ ກັບຜູ້ນຳອາຊຽນ(AIPA-ASEAN Leaders Interface) ນອກຈາກນັ້ນ, ຍັງໄດ້ປະສານສົມທົບກັບໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດແລະສະພາປະຊາຊົນຂັ້ນແຂວງ ຫຼື ສະເຕັບສ໌ (STEPs) ໃນການຈັດເຝິກອົບຮົມທັກສະໃນການຮັບໃຊ້ກອງປະຊຸມໃຫຍ່ໄອປາ ໃຫ້ແກ່ພະນັກງານຂອງສະພາແຫ່ງຊາດ ທີ່ຈະຈັດຂຶ້ນໃນລະຫວ່າງວັນທີ 18-24 ສິງຫາ, ຈັດກອງປະຊຸມສຳມະນາກ່ຽວກັບທັກສະໃຫ້ແກ່ສະມາຊິກສະພາແຫ່ງຊາດລະຫວ່າງວັນທີ 27-28 ສິງຫານີ້ ຈຶ່ງສະເໜີໃຫ້ກອງເລຂາໄອປາມາຊ່ວຍນຳສະເໜີບົດຮຽນແລະແລກປ່ຽນປະສົບການຕົວຈິງກັບຄະນະຜູ້ແທນລາວກ່ຽວກັບພາລະບົດບາດຂອງໄອປາ, ກົນໄກການດຳເນີນກອງປະຊຸມ, ການບັນຊາ ແລະ ການອຳນວຍຄວບຄຸມກອງປະຊຸມໄອປາ; ພ້ອມກັນນັ້ນ, ກໍສະເໜີທ່ານເລຂາທິການໃຫຍ່ໄອປາ ຢືນຢັນຄືນກ່ຽວກັບຄວາມຮັບຜິດຊອບໃນການສ້າງເອກະສານເຊັ່ນ: ບົດບັນທຶກລາຍງານກອງປະຊຸມຂອງກຳມາທິການປະຈຳຕ່າງໆ (Committee Reports), ຮ່າງຖະແຫຼງການຮ່ວມກອງປະຊຸມ (Joint Communique) ລວມທັງຜູ້ຕີພິມ, ຮຽບຮຽງ ແລະ ແປເອກະສານກັບທີ່ໃນແຕ່ລະກອງປະຊຸມຂອງກຳມາທິການປະຈຳຕ່າງໆ. ຈາກນັ້ນ, ບັນດາຜູ້ເຂົ້າຮ່ວມ ໄດ້ມີຄຳຄິດຄຳເຫັນ, ຍົກບັນຫາ ແລະ ຄວາມສົນໃຈຂອງຕົນແລກປ່ຽນກັບທີມງານກອງເລຂາໄອປາຢ່າງກົງໄປກົງມາ.

ໃນຕອນບ່າຍຂອງວັນດຽວກັນ, ທ່ານສັນຍາປຣະເສີດ ຫົວໜ້າກອງເລຂາແຫ່ງຊາດໄອປາ-45 ໄດ້ສືບຕໍ່ເຮັດວຽກກັບທ່ານເລຂາທິການໃຫຍ່ໄອປາ ໃນຂົງເຂດວຽກງານເລຂານຸການ ເຊິ່ງໄດ້ປຶກສາຫາລືກ່ຽວກັບການກະກຽມໃຫ້ແກ່ກອງປະຊຸມໄອປາ-45 ໂດຍສະເພາະເປົ້າໝາຍການເຊີນບັນດາແຂກຜູ້ເຂົ້າຮ່ວມ ແລະ ປະເທດສັງເກດການໃໝ່, ການປັບປຸງທຳມະນູນຂອງໄອປາ ທັງປຶກສາຫາລືການກະກຽມເປົ້າໝາຍຜູ້ເຂົ້າຮ່ວມໃນກອງປະຊຸມລະຫວ່າງຜູ້ນຳໄອປາ ກັບ ຜູ້ນຳອາຊຽນ ເຊິ່ງຈະຈັດຂຶ້ນໃນລະຫວ່າງກອງປະຊຸມສຸດຍອດອາຊຽນ (ASEAN Summit) ທີ່ຈະຈັດຂຶ້ນໃນວັນທີ 09 ຕຸລາ 2024.

ທ່ານ ນາງ ຊິຕິ ໂຣໄຊເມຣີຢັນຕີ ດາໂຕະ ຮາຈິ ອັບດຸນ ຣາມັນ ຍັງໄດ້ເຮັດວຽກຮ່ວມກັບຄະນະສະມາຊິກສະພາແຫ່ງຊາດເພດຍິງລາວ ນຳໂດຍທ່ານ ນາງ ທຸມມາລີ ວົງພະຈັນ ປະທານຄະນະສະມາຊິກສະພາແຫ່ງຊາດເພດຍິງ, ປະທານກອງປະຊຸມສະມາຊິກລັດຖະສະພາເພດຍິງໄອປາ ຫຼື ໄວປາ (WAIPA) ເພື່ອປຶກສາຫາລືກ່ຽວກັບການຫ້າງຫາກະກຽມກອງປະຊຸມວຽກງານໄວປາ ແລະ ວຽກງານປີ່ນອ້ອມອີກຈຳນວນໜຶ່ງ.

**(ຂ່າວ: ນາງ ອາລິນ ສຸພົມມະປະດິດ, ພາບ: ສອນສັກ ວັນວິໄຊ)**




# ເຜີຍແຜ່ກົດໝາຍການແກ້ໄຂຄຳຮ້ອງທຸກ (ສະບັບປັບປຸງ)



(ສພຊ) - ກອງປະຊຸມເຜີຍແຜ່ກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ (ສະບັບປັບປຸງປີ 2022) ໄດ້ຈັດຂຶ້ນໃນວັນທີ 1 ສິງຫາ 2024 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງຫົວພັນ ໂດຍການເປັນປະທານຂອງທ່ານ ຄຳແພງ ວິລະພັນ ກຳມະການຄະນະປະຈຳສະພາແຫ່ງຊາດ, ປະທານກຳມາທິການກົດໝາຍສະພາແຫ່ງຊາດ, ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 8 ແຂວງຫົວພັນ; ເຂົ້າຮ່ວມມີບັນດາທ່ານຄະນະປະຈຳ, ຄະນະເລຂາທິການສະພາປະຊາຊົນແຂວງ, ສະມາຊິກສະພາປະຊາຊົນແຂວງ ປະຈຳຢູ່ເທສະບານແຂວງ, ມີບັນດາທ່ານໃນຂົງເຂດຕຸລາການ, ພະແນກການອ້ອມຂ້າງແຂວງ, ອົງການທຽບເທົ່າຂັ້ນແຂວງ, ສອງກອງບັນຊາການ, ອົງການແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ ພ້ອມດ້ວຍພະນັກງານ-ລັດຖະກອນພາຍໃນເຂົ້າຮ່ວມຢ່າງຫຼວງຫຼາຍ.

ໂອກາດນີ້, ໄດ້ຮັບຟັງການເຜີຍແຜ່ກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ ສະບັບປັບປຸງປີ 2022 ໂດຍທ່ານ ໄກມະນີນ ເທບບົວລີ ຫົວໜ້າກົມຄຳຮ້ອງຂໍຄວາມເປັນທຳ ກຳມາທິການຍຸຕິທຳສະພາແຫ່ງຊາດ ເຊິ່ງກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ (ສະບັບປັບປຸງປີ 2022) ປະກອບມີ 8 ພາກ, 6 ໝວດ, 49 ມາດຕາ, ມີເນື້ອໃນຍົກໃຫ້ເຫັນຄຳຮ້ອງທຸກແມ່ນເອກະສານຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ຍື່ນຕໍ່ອົງການທີ່ກ່ຽວຂ້ອງ ເພື່ອໃຫ້ກວດກາ,ພິຈາລະນາ ແລະ ແກ້ໄຂກ່ຽວກັບການກະທຳຂອງບຸກຄົນ ຫຼື ການຕົກລົງຂອງນິຕິບຸກຄົນ, ການຈັດຕັ້ງອື່ນໆທີ່ເຫັນວ່າ ເປັນການລະເມີດກົດໝາຍ, ບໍ່ໄດ້ຮັບຄວາມຍຸຕິທຳ, ກໍ່ຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດຂອງລັດ, ລວມໝູ່ ຫຼື ສິດຜົນປະໂຫຍດອັນຊອບທຳຂອງຕົນ ແນໃສ່ເຮັດໃຫ້ວຽກງານແກ້ໄຂຄຳຮ້ອງທຸກມີຄວາມໂລ່ງລຽນ, ສອດຄ່ອງຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງແຕ່ລະອົງການ, ຮັບປະກັນການບໍລິການຮັບໃຊ້ປະຊາຊົນໃຫ້ມີຄວາມວ່ອງໄວ, ສາມາດປົກປ້ອງສິດ, ຜົນປະໂຫຍດອັນຊອບທຳຂອງປະຊາຊົນລາວບັນດາເຜົ່າຕາມກົດໝາຍ.

ຈາກນັ້ນ, ບັນດາຜູ້ເຂົ້າຮ່ວມ ໄດ້ພ້ອມກັນສຸມໃສ່ຄົ້ນຄວ້າແລກປ່ຽນຄຳເຫັນຢ່າງກວ້າງຂວາງ, ສ້າງສັນ ແລະ ກົງໄປກົງມາ.

**(ນັກຂ່າວ ສພຂ ຫົວພັນ)**

# ໜ່ວຍແມ່ຍິງກົມເລຂານຸການ ຕີລາຄາການປະຕິບັດວຽກງານ



(ສພຊ) - ກອງປະຊຸມສະຫຼຸບຕີລາຄາການຈັດຕັ້ງປະຕິບັດວຽກແຕ່ປີ 2018 ຮອດປັດຈຸບັນ ແລະ ທິດທາງ 5 ປີຕໍ່ໜ້າຂອງໜ່ວຍແມ່ຍິງກົມເລຂານຸການ ໄດ້ຈັດຂຶ້ນໃນຕອນເຊົ້າວັນອັງຄານທີ 30 ກໍລະກົດຜ່ານມາ ທີ່ຫ້ອງຖະແຫຼງຂ່າວຂອງສະພາແຫ່ງຊາດ ພາຍໃຕ້ການເປັນປະທານຂອງສະຫາຍ ນາງ ກາບແກ້ວ ພິໄລສານ ຫົວໜ້າໜ່ວຍແມ່ຍິງກົມເລຂານຸການ; ມີສະຫາຍ ຄຳສະໄໝ ສຳມາວົງ ຄະນະພັກຮາກຖານຄະນະເລຂາທິການສະພາແຫ່ງຊາດ (ຄລສ), ເລຂາໜ່ວຍພັກກົມເລຂານຸການ, ສະຫາຍນາງອຸດນາລີ ໄຊຍະສັກ ຄະນະບໍລິຫານງານສະຫະພັນແມ່ຍິງສະພາແຫ່ງຊາດ, ພ້ອມດ້ວຍຕາງໜ້າອົງການຈັດຕັ້ງມະຫາຊົນຂອງກົມ, ບັນດາສະຫາຍຄະນະໜ່ວຍແມ່ຍິງທີ່ຂຶ້ນກັບ ຄລສ ລວມຜູ້ເຂົ້າຮ່ວມທັງໝົດ 19 ສະຫາຍ ຍິງ 16 ສະຫາຍ.

ສະມາຊິກແມ່ຍິງພາຍໃນໜ່ວຍ 8 ສະຫາຍ ໄດ້ພິຈາລະນາ ແລະ ຮັບຮອງເອົາບົດສະຫຼຸບການເຄື່ອນໄຫວວຽກງານໄລຍະປີ 2018-2024 ແລະ ທິດທາງແຜນການ 5 ປີຕໍ່ໜ້າຂອງໜ່ວຍແມ່ຍິງກົມເລຂານຸການ, ບົດສຳຫຼວດການນຳພາລວມຂອງຄະນະໜ່ວຍແມ່ຍິງກົມເລຂານຸການ; ກອງປະຊຸມໄດ້ຜ່ານຂໍ້ຕົກລົງຮັບຮອງເອົາການແຕ່ງຕັ້ງຄະນະໜ່ວຍແມ່ຍິງກົມເລຂານຸການຊຸດໃໝ່ ເຊິ່ງແຕ່ງຕັ້ງສະຫາຍ ນາງ ກາບແກ້ວ ພິໄລສານ ເປັນຫົວໜ້າ, ສະຫາຍ ນາງ ໄພມະນີ ທຳມະວົງ ເປັນຮອງຫົວໜ້າ, ສະຫາຍ ນາງ ຄອນສະຫວັນ ສີຫາປັນຍາ ເປັນຄະນະ.

ກອງປະຊຸມໄດ້ຮັບຟັງການໂອ້ລົມຈາກສະຫາຍ ຄຳສະໄໝ ສຳມາວົງ ເຊິ່ງໄດ້ມີຄຳເຫັນເນັ້ນໜັກໃຫ້ຄະນະ ແລະ ສະມາຊິກແມ່ຍິງພາຍໃນໜ່ວຍ ສືບຕໍ່ປະຕິບັດຕາມມະຕິ, ຄຳສັ່ງ, ກົດລະບຽບຕ່າງໆທີ່ສະຫະພັນແມ່ຍິງລາວວາງອອກ; ເພີ່ມທະວີການຄົ້ນຄວ້າເຊື່ອມຊຶມນິຕິກຳກ່ຽວຂ້ອງຂົງເຂດວຽກງານຂອງຕົນໃຫ້ເລິກເຊິ່ງ ເພື່ອສາມາດຕອບສະໜອງໄດ້ຕາມຄວາມຮຽກຮ້ອງຕ້ອງການຂອງວຽກງານໃຫ້ມີຄຸນນະພາບດີຂຶ້ນເລື້ອຍໆ; ເຂົ້າຮ່ວມຂະບວນການຂອງອົງການຈັດຕັ້ງມະຫາຊົນຢ່າງຫ້າວຫັນ ແລະ ຊຸກຍູ້ການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 3 ດີ ຂອງແມ່ຍິງລາວ ຕິດພັນກັບຂໍ້ແຂ່ງຂັນ "ຮັກຊາດ ແລະ ພັດທະນາ" ໃຫ້ເປັນຂະບວນຟົດຟື້ນ.

**(ອານຸສອນ ພູມມີທອນ)**

# ເຜີຍແຜ່ກົດໝາຍການແກ້ໄຂຄຳຮ້ອງທຸກ ຢູ່ສອງແຂວງ



(ສພຊ)-ລະຫວ່າງທ້າຍເດືອນກໍລະກົດຫາຕົ້ນເດືອນສິງຫາ 2024 ທ່ານ ສີສູນທອນ ສ.ຜາບມີໄຊຍ໌ ຮອງປະທານກຳມາທິການຍຸຕິທຳ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວເຮັດວຽກຢູ່ແຂວງຜົ້ງສາລີ ແລະ ແຂວງວຽງຈັນ ເພື່ອດຳເນີນກອງປະຊຸມເຜີຍແຜ່ກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ ສະບັບປັບປຸງປີ 2022 ໂດຍມີທ່ານຮອງເຈົ້າແຂວງ, ຮອງປະທານສະພາປະຊາຊົນແຂວງ, ເຈົ້າເມືອງ-ຮອງເຈົ້າເມືອງ, ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ສະມາຊິກສະພາປະຊາຊົນແຂວງປະຈຳເມືອງ, ບັນດາພະແນກການ ແລະ ອົງການທີ່ກ່ຽວຂ້ອງຂອງ 2 ແຂວງດັ່ງກ່າວ ເຂົ້າຮ່ວມ.

ຈຸດປະສົງຂອງການເຜີຍແຜ່ ເພື່ອຮັບປະກັນເຮັດໃຫ້ການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ ຂອງບັນດາອົງການ ແລະ ຂະແໜງການຕ່າງໆຢູ່ຂັ້ນແຂວງ ແລະ ເມືອງ ໄດ້ຈັດຕັ້ງປະຕິບັດເອກະພາບກັນ ແລະ ເຂັ້ມງວດຕາມກົດໝາຍ; ແລກປ່ຽນຄຳຄິດຄຳເຫັນ ແລະ ຖອດຖອນບົດຮຽນ ໃນການຈັດຕັ້ງປະຕິບັດກົດໝາຍແລະການເຜີຍແຜ່ກົດໝາຍອື່ນໆໃນຕໍ່ໜ້າ.

ໃນກອງປະຊຸມ ທັງ 2 ແຂວງ, ທ່ານ ສີສູນທອນ ສ.ຜາບມີໄຊຍ໌ ໄດ້ກ່າວວ່າ: ການເຜີຍແຜ່ກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກໄດ້ດຳເນີນໄປໃນຂອບເຂດທົ່ວປະເທດ ໃຫ້ແກ່ກະຊວງ, ອົງການ ແລະ ຂະແໜງການຂັ້ນທ້ອງຖິ່ນ ໂດຍສະເພາະແມ່ນອົງການຈັດຕັ້ງລັດ ແລະ ພະນັກງານ-ລັດຖະກອນທີ່ຮັບຜິດຊອບວຽກງານການແກ້ໄຂຄຳຮ້ອງທຸກ ແລະ ເປັນການເຜີຍແຜ່ໃຫ້ພໍ່ແມ່ປະຊາຊົນບັນດາເຜົ່າ ໄດ້ຮັບຮູ້ ແລະ ເຂົ້າໃຈຕໍ່ເນື້ອໃນກົດໝາຍດັ່ງກ່າວ ເປັນຕົ້ນ: ຄວາມໝາຍ ແລະ ປະເພດຂອງຄຳຮ້ອງທຸກ, ສິດ ແລະ ໜ້າທີ່, ຂັ້ນຕອນ ແລະ ວິທີການໃນການແກ້ໄຂ, ຄວາມຮັບຜິດຊອບຂອງອົງການທີ່ແກ້ໄຂຄຳຮ້ອງທຸກໃນແຕ່ລະປະເພດ ຄື: ຄຳສະເໜີ, ຄຳຮ້ອງຟ້ອງ ແລະ ຄຳຮ້ອງຂໍຄວາມເປັນທຳ ແນໃສ່ເຮັດໃຫ້ອົງການຈັດຕັ້ງລັດແລະພາກສ່ວນຕ່າງໆໃນສັງຄົມມີຄວາມຮັບຮູ້ເຂົ້າໃຈເປັນເອກະພາບກັນໃນການນຳໃຊ້ ແລະ ຈັດຕັ້ງປະຕິບັດກົດໝາຍສະບັບນີ້ ໃຫ້ຖືກຕ້ອງ ແລະ ເຂັ້ມງວດ.

ຜ່ານການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກໃນໄລຍະຜ່ານມາ, ກົດໝາຍດັ່ງກ່າວໄດ້ກາຍເປັນເຄື່ອງມືສຳຄັນໃຫ້ແກ່ອົງການຈັດຕັ້ງລັດທີ່ຮັບຜິດຊອບແກ້ໄຂຄຳຮ້ອງທຸກ ສາມາດປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນໄດ້ເປັນຢ່າງດີ ທັງເປັນການສ້າງເງື່ອນໄຂໃຫ້ປະຊາຊົນສາມາດເຂົ້າເຖິງຂະບວນການຍຸຕິທຳຫຼາຍຂຶ້ນ; ສິດ ແລະ ຜົນປະໂຫຍດຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ໄດ້ຮັບການປົກປ້ອງຕາມລັດຖະທຳມະນູນ ແລະ ກົດໝາຍ ອັນເປັນການປະກອບສ່ວນເຮັດໃຫ້ສັງຄົມມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍໂດຍພື້ນຖານ.

ນອກຈາກນັ້ນ, ກຳມາທິການຍຸຕິທຳ ຍັງໄດ້ມອບປຶ້ມກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ, ແຜ່ນພັບ ແລະ ໂປສເຕີ ກ່ຽວກັບການຮັບ ແລະ ພິຈາລະນາຄຳຮ້ອງຂໍຄວາມເປັນທຳ ຈຳນວນໜຶ່ງ ໃຫ້ແກ່ສະພາປະຊາຊົນແຂວງ, ເມືອງແລະບ້ານເພື່ອເອົາໄປນຳໃຊ້ເປັນບ່ອນອີງໃນການປະຕິບັດວຽກງານ ແລະ ເຜີຍແຜ່ຕໍ່ໃຫ້ແກ່ພາກສ່ວນກ່ຽວຂ້ອງໄດ້ຮັບຮູ້.

ໂອກາດເຄື່ອນໄຫວວຽກງານຢູ່ແຂວງວຽງຈັນ, ທ່ານຮອງປະທານກຳມາທິການຍຸຕິທຳ ພ້ອມດ້ວຍຄະນະ ໄດ້ເຂົ້າລາຍງານຈຸດປະສົງຂອງການເຄື່ອນໄຫວຄັ້ງນີ້ໃຫ້ທ່ານເຈົ້າແຂວງຮັບຊາບແລະໄດ້ຮັບຟັງສະພາບຈຸດພິເສດການແກ້ໄຂຄຳຮ້ອງທຸກຂອງປະຊາຊົນພາຍໃນແຂວງ ໂດຍຫຍໍ້ ແລະ ຂໍ້ສະເໜີຕ່າງໆທີ່ກ່ຽວຂ້ອງຈຳນວນໜຶ່ງ.

ການເຄື່ອນໄຫວເຜີຍແຜ່ກົດໝາຍຄັ້ງນີ້ ໄດ້ຮັບການສະໜັບສະໜູນຊ່ວຍເຫຼືອທາງດ້ານງົບປະມານຈາກໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ຫຼືສະເຕັບສ໌(STEPs) ໂດຍຜ່ານກອງເລຂາຄຸ້ມຄອງແຫຼ່ງທຶນຊ່ວຍເຫຼືອລ້າໃຫ້ແກ່ສະພາແຫ່ງຊາດ ສົມທົບກັບງົບປະມານຂອງຄະນະເລຂາທິການສະພາແຫ່ງຊາດ.

**(ນາງ ກິ່ງໃຈ ແສງອຳພັນ)**

# ກອງປະຊຸມໜ່ວຍແມ່ຍິງຮາກຖານ ກປຊສ ຄັ້ງທີ I



(ສພຊ) - ກອງປະຊຸມໜ່ວຍແມ່ຍິງຮາກຖານກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ (ກປຊສ) ຄັ້ງທີ I ໄດ້ຈັດຂຶ້ນໃນວັນທີ 31 ກໍລະກົດຜ່ານມາ ໂດຍການເປັນປະທານຮ່ວມຂອງສະຫາຍ ພັອ. ແສງທອງ ທຳມະເທວາ ຮອງປະທານກວດກາໜ່ວຍພັກຮາກຖານ ກປຊສ, ສະຫາຍ ນາງ ຄຳຫຼ້າ ສິດທະຈອນ ກຳມະການຄະນະບໍລິຫານງານສະຫະພັນແມ່ຍິງສະພາແຫ່ງຊາດ ແລະ ສະຫາຍ ພັຕ. ນາງ ດວງມາລາ ດວງຕາ ຫົວໜ້າໜ່ວຍແມ່ຍິງຮາກຖານກຳມາທິການດັ່ງກ່າວ ເຊິ່ງກອງປະຊຸມໄດ້ຮັບຮອງເອົາບັນດາເນື້ອໃນສຳຄັນຄື: ບົດສຳຫຼວດການນຳພາຈັດຕັ້ງປະຕິບັດວຽກງານແຕ່ປີ 2018 ຮອດປັດຈຸບັນ ແລະ ທິດທາງແຜນການ 5 ປີຕໍ່ໜ້າ, ບົດສຳຫຼວດການນຳພາລວມຂອງຄະນະໜ່ວຍແມ່ຍິງຮາກຖານ, ຂໍ້ຕົກລົງຮັບຮອງເອົາຄະນະໜ່ວຍແມ່ຍິງຮາກຖານກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ອີງໃສ່ການຢັ່ງຫາງສຽງ ໂດຍແຕ່ງຕັ້ງສະຫາຍ ພັຕ. ນາງ ດວງມາລາ ດວງຕາ ເປັນຫົວໜ້າ, ສະຫາຍ ຮອ. ນາງ ວັນນະສິດ ພົມມາວັນ ເປັນຮອງຫົວໜ້າ.

ສະຫາຍ ພັອ. ແສງທອງ ທຳມະເທວາ ໄດ້ຮຽກຮ້ອງຄະນະໜ່ວຍຊຸດໃໝ່ ເອົາໃຈໃສ່ຊີ້ນຳ-ນຳພາການເມືອງ-ແນວຄິດຂອງສະມາຊິກ ໃຫ້ມີຄຸນທາດການເມືອງໜັກແໜ້ນ, ເຕົ້າໂຮມຄວາມສາມັກຄີ, ຊຸກຍູ້ສະມາຊິກແມ່ຍິງເຂົ້າຮ່ວມຂະບວນການຂອງອົງການຈັດຕັ້ງຢ່າງເປັນເຈົ້າການ; ດຳເນີນຊີວິດການເມືອງເປັນປົກກະຕິ ໂດຍຖືເອົາການຕຳນິຕິຊົມຕົນເອງ, ຕິຊົມເຊິ່ງກັນແລະກັນ ໃຫ້ເລິກເຊິ່ງ ແລະ ກວ້າງຂວາງກວ່າເກົ່າ; ຕັ້ງໜ້າປະຕິບັດຂໍ້ແຂ່ງຂັນ 3 ດີ ຂອງແມ່ຍິງລາວ ຕິດພັນກັບຂໍ້ແຂ່ງຂັນ “ຮັກຊາດ ແລະ ພັດທະນາ” ເຊິ່ງເປັນພື້ນຖານປັດໄຈສຳຄັນ ເພື່ອເຮັດໃຫ້ໜ່ວຍແມ່ຍິງ ກປຊສ ສາມາດຍາດໄດ້ ຜົນງານທີ່ດີເດັ່ນຂຶ້ນກວ່າເກົ່າ.

**(ນາງ ໄຊໂສພາພອນ ມິ່ງມຸງຄຸນ)**

# ກອງປະຊຸມໃຫຍ່ ຄັ້ງທີ I
# ໜ່ວຍແມ່ຍິງກົມສື່ມວນຊົນ



(ສພຊ) - ກອງປະຊຸມໃຫຍ່ ຄັ້ງທີ I ຂອງໜ່ວຍແມ່ຍິງກົມສື່ມວນຊົນ, ສະພາແຫ່ງຊາດ (ສພຊ) ໄດ້ຈັດຂຶ້ນໃນຕອນບ່າຍວັນທີ 9 ສິງຫາຜ່ານມາ ໂດຍການເປັນປະທານຮ່ວມຂອງສະຫາຍ ນາງ ດາວເພັດ ສີຫາວົງ ຮອງປະທານ ທັງເປັນປະທານກວດກາຄະນະບໍລິຫານງານສະຫະພັນແມ່ຍິງສະພາແຫ່ງຊາດ, ສະຫາຍ ວິລະພັດ ພາບວິໄຊ ຮອງເລຂາໜ່ວຍພັກກົມສື່ມວນຊົນ ແລະ ສະຫາຍ ນາງ ກິ່ງໃຈ ແສງອຳພັນ ຫົວໜ້າໜ່ວຍແມ່ຍິງກົມສື່ມວນຊົນ; ມີບັນດາຕາງໜ້າສະຫະພັນແມ່ຍິງຮາກຖານ ແລະ ໜ່ວຍແມ່ຍິງພາຍໃນ ສພຊ ພ້ອມດ້ວຍອົງການຈັດຕັ້ງມະຫາຊົນພາຍໃນກົມ ເຂົ້າຮ່ວມ 30 ສະຫາຍ, ຍິງ 27 ສະຫາຍ.

ຜູ້ແທນກອງປະຊຸມ 11 ສະຫາຍ ໄດ້ເປັນເອກະສັນຮັບຮອງເອົາບົດລາຍງານການເມືອງການຈັດຕັ້ງປະຕິບັດວຽກງານແຕ່ປີ 2018-2024 ແລະ ທິດທາງແຜນການເຄື່ອນໄຫວວຽກງານ 5 ປີຕໍ່ໜ້າ, ບົດສຳຫຼວດການນຳພາລວມຂອງຄະນະໜ່ວຍແມ່ຍິງກົມສື່ມວນຊົນ; ພ້ອມກັນນັ້ນ, ກໍໄດ້ໃຊ້ສິດປະຊາທິປະໄຕປ່ອນບັດເລືອກຕັ້ງເອົາຄະນະໜ່ວຍແມ່ຍິງຊຸດໃໝ່ ບົນພື້ນຖານຫຼັກການລວມສູນປະຊາທິປະໄຕ, ຖືກຕ້ອງສອດຄ່ອງກັບມາດຕະຖານ ແລະ ເງື່ອນໄຂທີ່ກຳນົດໄວ້ເຊິ່ງມີຜູ້ອອກສະໝັກຮັບເລືອກຕັ້ງ 5 ສະຫາຍ ເລືອກເອົາ 3 ສະຫາຍ, ກອງປະຊຸມຄັ້ງປະຖົມມະລຶກຂອງໜ່ວຍແມ່ຍິງກົມສື່ມວນຊົນ ຊຸດທີ I ໄດ້ເປັນເອກະພາບເລືອກເອົາສະຫາຍ ນາງ ວັນນາລິນ ສຸລິວົງສັກ ເປັນຫົວໜ້າ, ສະຫາຍ ນາງ ອານິຕາ ມ່ວນສະຫວັດເປັນຮອງຫົວໜ້າ ແລະ ສະຫາຍ ນາງ ໄຊໂສພາພອນ ມິ່ງມຸງຄຸນ ເປັນຄະນະ ທັງເປັນຜູ້ກວດກາ.

ສະຫາຍ ວິລະພັດ ພາບວິໄຊ ມີຄຳເຫັນໂອ້ລົມຕໍ່ກອງປະຊຸມ ເຊິ່ງໄດ້ສະແດງຄວາມຍ້ອງຍໍຊົມເຊີຍ ແລະ ຕີລາຄາສູງຕໍ່ຜົນງານການເຄື່ອນໄຫວ ແລະ ສ້າງຂະບວນການຕ່າງໆ ທີ່ບັນດາສະຫາຍສະມາຊິກແມ່ຍິງ ໄດ້ຕັ້ງໜ້າປະກອບສ່ວນຈັດຕັ້ງປະຕິບັດໜ້າທີ່ວຽກງານໃນໄລຍະຜ່ານມາທັງເນັ້ນໜັກໃຫ້ຄະນະໜ່ວຍແມ່ຍິງຊຸດໃໝ່ ພ້ອມກັບສະມາຊິກພາຍໃນໜ່ວຍ ຈົ່ງສືບຕໍ່ເສີມຂະຫຍາຍດ້ານດີ, ແກ້ໄຂດ້ານອ່ອນ ແລະ ຂໍ້ຄົງຄ້າງ ພ້ອມທັງປະຕິບັດຕາມມະຕິ, ຄຳສັ່ງ, ກົດລະບຽບຕ່າງໆທີ່ສະຫະພັນແມ່ຍິງລາວ ກໍຄືສະຫະພັນແມ່ຍິງ ສພຊ ວາງອອກຢ່າງເຂັ້ມງວດ ແລະ ມີປະສິດທິຜົນສູງ; ມີຄວາມຮັບຜິດຊອບດ້ານໜ້າທີ່ການເມືອງ ແລະ ວິຊາສະເພາະຂອງຕົນ ສູງຂຶ້ນກວ່າເກົ່າ, ຕັ້ງໜ້າປະຕິບັດຂໍ້ແຂ່ງຂັນ 3 ດີ ຕິດພັນກັບຂໍ້ແຂ່ງຂັນ ຮັກຊາດ ແລະ ພັດທະນາ ໂດຍສະເພາະມະຕິກອງປະຊຸມໃຫຍ່ຄັ້ງທີ I ຂອງໜ່ວຍແມ່ຍິງກົມສື່ມວນຊົນ; ສືບຕໍ່ຮັກສາວັດທະນະທຳ ແລະ ຮີດຄອງປະເພນີທີ່ເປັນເອກະລັກເປັນມູນເຊື້ອຂອງແມ່ຍິງລາວ ມີຄວາມອ່ອນນ້ອມຖ່ອມຕົນ, ເຄົາລົບ ແລະ ໃຫ້ກຽດເຊິ່ງກັນແລະກັນ; ພ້ອມກັນນັ້ນ, ກໍເອົາໃຈໃສ່ພັດທະນາຕົນເອງທັງທາງດ້ານຄວາມຮູ້ວິຊາສະເພາະ ແລະ ດ້ານອື່ນທີ່ກ່ຽວຂ້ອງ ໃຫ້ສົມຄູ່ກັບໜ້າທີ່ວຽກງານຂອງຕົນໃນແຕ່ລະໄລຍະທີ່ມີສິ່ງໃໝ່ໆເກີດຂຶ້ນຢູ່ເລື້ອຍໆ. ນອກຈາກນີ້, ສະຫາຍຍັງຢໍ້າຕື່ມໃຫ້ຄະນະໜ່ວຍແມ່ຍິງຊຸດໃໝ່ ຊ່ວຍຄະນະໜ່ວຍພັກ ສຶກສາອົບຮົມການເມືອງ-ແນວຄິດ ແລະ ເປັນເຈົ້າການເຕົ້າໂຮມຄວາມສາມັກຄີສະມາຊິກແມ່ຍິງພາຍໃນໜ່ວຍ.

ກອງປະຊຸມໃຫຍ່ ຄັ້ງທີ I ຂອງໜ່ວຍແມ່ຍິງກົມສື່ມວນຊົນ ຮຽກຮ້ອງບັນດາສະຫາຍສະມາຊິກ ຈົ່ງເຊີດຊູນ້ຳໃຈສາມັກຄີເປັນປຶກແຜ່ນ, ຍົກສູງຄວາມເປັນເຈົ້າຕົນເອງ, ເພີ່ມທະວີຄວາມຮັບຜິດຊອບ, ເສີມຂະຫຍາຍຫົວຄິດປະດິດສ້າງຂອງຕົນ ຜັນຂະຫຍາຍມະຕິກອງປະຊຸມໃຫຍ່ໃນຄັ້ງນີ້ ໝູນໃຊ້ເຂົ້າໃນການພັດທະນາວຽກງານແມ່ຍິງ ໃຫ້ປາກົດຜົນເປັນຈິງ ແລະ ມີຜົນສຳເລັດຢ່າງຈົບງາມ.

**(ຂ່າວ: ນາງ ປາກາລັກ ພົມມີໄຊ, ພາບ: ນາງ ກຸກກິກ ບຸດດາໄຊ)**

# ພົບປະຜູ້ມີສິດເລືອກຕັ້ງ ແລະ ຕິດຕາມກວດກາການປະຕິບັດວຽກງານຢູ່ 2 ເມືອງ ແຂວງຜົ້ງສາລີ



(ສພຊ) - ໃນວັນທີ 29-31 ກໍລະກົດ 2024 ຄະນະປະຈຳສະພາປະຊາຊົນແຂວງ (ສພຂ) ຜົ້ງສາລີ ນຳໂດຍທ່ານ ທຸມເຜັງ ຈອມວິສານ ຮອງປະທານຄະນະປະຈຳສພຂພ້ອມດ້ວຍທີມງານ ໄດ້ເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງ ແລະ ຕິດຕາມກວດກາການຈັດຕັ້ງປະຕິບັດວຽກງານການເປັນເສນາທິການ ໃຫ້ແກ່ຄະນະປະຈຳ ສພຂ ຂອງຄະນະສະມາຊິກສະພາປະຊາຊົນແຂວງ (ສສຂ) ປະຈຳເມືອງ, ພ້ອມທັງຈັດຕັ້ງຜັນຂະຫຍາຍ ແລະ ໂຄສະນາເຜີຍແຜ່ເນື້ອໃນຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ຂອງ ສພຂ ຊຸດທີ II, ມີບັນດາທ່ານເລຂາພັກເມືອງ, ຮອງເລຂາພັກເມືອງ, ຄະນະປະຈຳພັກເມືອງ, ກຳມະການພັກເມືອງ, ຫົວໜ້າ-ຮອງຫົວໜ້າຫ້ອງການເມືອງ, ພະນັກງານບຳນານ, ອົງການທຽບເທົ່າຫ້ອງການຂັ້ນເມືອງ, ກອງບັນຊາການ ປກຊ-ປກສເມືອງ, ອົງການແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນຂັ້ນເມືອງ ແລະ ອົງການຈັດຕັ້ງບ້ານ, ພໍ່ແມ່ປະຊາຊົນ ເຂົ້າຮ່ວມຮັບຟັງທັງໝົດຢ່າງພ້ອມພຽງ.

ການເຄື່ອນໄຫວວຽກງານຄັ້ງນີ້ ກໍເພື່ອເປັນການຈັດຕັ້ງປະຕິບັດຕາມພະລະບົດບາດ, ສິດ ແລະ ໜ້າທີ່ຂອງ ສພຂ ຕາມທີ່ກົດໝາຍໄດ້ກຳນົດໄວ້ ໂດຍສະເພາະແມ່ນຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດໜ້າທີ່ວຽກງານຂອງຄະນະ ສສຂ ປະຈຳເມືອງ ໃນການເປັນເສນາທິການໃຫ້ແກ່ຄະນະປະຈຳ ສພຂ, ການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານຂອງໜ່ວຍງານເສນາທິການຊ່ວຍວຽກຄະນະ ສສຂ ປະຈຳເມືອງ; ຈັດຕັ້ງຜັນຂະຫຍາຍມະຕິວ່າດ້ວຍການພົບປະຜູ້ມີສິດເລືອກຕັ້ງ ແລະ ເນື້ອໃນມະຕິຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ7ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສພຂ ຊຸດທີ II ແລະ ຕິດພັນກັບການຮັບຟັງຄຳຄິດເຫັນ ແລະ ເກັບກຳສະພາບການການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມຂອງເມືອງ ແລະ ບັນຫາຕ່າງໆຂອງປະຊາຊົນບັນດາເຜົ່າແນໃສ່ເຮັດໃຫ້ບັນຫາພື້ນຖານຂອງຊາດ ກໍຄືຂອງທ້ອງຖິ່ນທີ່ສະພາແຫ່ງຊາດ ແລະ ສພຂ ຮັບຮອງເອົາໄດ້ຮັບການຈັດຕັ້ງຜັນຂະຫຍາຍເຂົ້າໃນວຽກງານຕົວຈິງ.

ເນື້ອໃນກອງປະຊຸມຄັ້ງນີ້ ໄດ້ຮັບຟັງການລາຍງານການຈັດຕັ້ງປະຕິບັດວຽກງານຮອບດ້ານ ປະຈຳ 6 ເດືອນຕົ້ນປີ ແລະ ທິດທາງແຜນການປະຈຳ 6 ເດືອນທ້າຍປີ 2024 ຂອງອົງການປົກຄອງເມືອງ, ການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳ 6 ເດືອນຕົ້ນປີ ແລະ ແຜນການເຄື່ອນໄຫວວຽກງານປະຈຳ 6 ເດືອນທ້າຍປີ 2024 ຂອງຄະນະ ສສຂ ປະຈຳເມືອງ, ການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳ 6 ເດືອນຕົ້ນປີ ແລະ ແຜນການເຄື່ອນໄຫວວຽກງານປະຈຳ 6 ເດືອນທ້າຍປີ 2024 ຂອງໜ່ວຍງານເສນາທິການຊ່ວຍວຽກຄະນະ ສສຂ ປະຈຳເມືອງ; ພ້ອມກັນນັ້ນ, ໄດ້ຮັບຟັງການເຜີຍແຜ່ມະຕິຂອງຄະນະປະຈຳ ສພຂ ຄື: ມະຕິວ່າດ້ວຍການພົບປະປະຊາຊົນ ຂອງສະມາຊິກສະພາແຫ່ງຊາດ ແລະ ສສຂ ສະບັບເລກທີ 308/ຄປຈຂ, ລົງວັນທີ 27 ທັນວາ 2021, ມະຕິວ່າດ້ວຍການຮັບ ແລະ ຄົ້ນຄວ້າພິຈາລະນາຄຳຮ້ອງຂໍ້ຄວາມເປັນ ສະບັບເລກທີ 39/ຄປຈຂ, ລົງວັນທີ 26 ມັງກອນ 2024 ແລະ ພ້ອມທັງນຳເອົາເນື້ອໃນມະຕິຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດ ຊຸດທີ IX ມີ 20 ສະບັບ ໃນນີ້, ວຽກງານຂົງເຂດລັດຖະບານ 4 ສະບັບ, ວຽກງານອົງການກວດສອບແຫ່ງລັດ 1 ສະບັບ, ວຽກງານສະພາແຫ່ງຊາດ 1 ສະບັບ, ວຽກງານສ້າງ ແລະ ປັບປຸງກົດໝາຍ 13 ສະບັບ (ສ້າງໃໝ່ 2 ສະບັບ ແລະ ປັບປຸງ 11 ສະບັບ ແລະ ວຽກງານບຸຄະລາກອນ 1 ສະບັບ ແລະ ເນື້ອໃນມະຕິຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 7 ຂອງ ສພຂ ຊຸດທີ II ມີ 4 ສະບັບ ໃນນີ້, ວຽກງານຂົງເຂດອົງການປົກຄອງແຂວງ 3 ສະບັບ, ວຽກງານ ສພຂ 1 ສະບັບ. ຈາກນັ້ນ, ຜູ້ເຂົ້າຮ່ວມກອງປະຊຸມ ກໍໄດ້ຜັດປ່ຽນກັນປະກອບຄຳຄິດຄຳເຫັນຢ່າງກົງໄປກົງມາ ລັກສະນະສ້າງສັນ.

ໃນຕອນທ້າຍທ່ານທຸມເຜັງ ຈອມວິສານ ຮອງປະທານຄະນະປະຈຳ ສພຂ ໄດ້ເນັ້ນໜັກບາງບັນຫາ ໃຫ້ແກ່ອົງການປົກຄອງເມືອງ ແລະ ບັນດາທ່ານ ສສຂ ປະຈຳເມືອງ ຕ້ອງເອົາໃຈໃສ່ໃນການເພີ່ມທະວີກຳແໜ້ນແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ, ມະຕິກອງປະຊຸມໃຫຍ່ຄັ້ງທີ XI ຂອງອົງຄະນະພັກແຂວງ ກໍຄືມະຕິກອງປະຊຸມໃຫຍ່ ຂອງອົງຄະນະພັກເມືອງວາງອອກໃຫ້ເລິກເຊິ່ງ ແລະ ຈັດຕັ້ງປະຕິບັດໃຫ້ຖືກຕາມລະບຽບກົດໝາຍວາງອອກຢ່າງເຂັ້ມງວດ ແລະ ພ້ອມກັນນີ້ກໍໃຫ້ກຳແໜ້ນບັນດາເນື້ອໃນ ມະຕິກອງປະຊຸມສະໄໝສາມັນ ເທື່ອທີ 7 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ຂອງສະພາປະຊາຊົນຂັ້ນແຂວງຊຸດທີII ໄດ້ຮັບຮອງ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດໃຫ້ບັນລຸຕາມແຜນການທີ່ໄດ້ວາງໄວ້; ສະເໜີໃຫ້ຄະນະ ສສຂ ປະຈຳເມືອງ ສືບຕໍ່ຍົກສູງຄວາມຮັບຜິດຊອບໜ້າທີ່ການເມືອງ ຕໍ່ວຽກງານການຕິດຕາມກວດກາເປັນຕົ້ນແມ່ນ ຂອດການປະສານສົມທົບ, ລວມທັງການຊຸກຍູ້ຈັດຕັ້ງປະຕິບັດຄຳສະເໜີຂອງຜູ້ມີສິດເລືອກຕັ້ງຕາມຂອບເຂດຄວາມຮັບຜິດຊອບໃຫ້ສູງຂຶ້ນກ່ວາເກົ່າ ແລະ ສືບຕໍ່ເພີ່ມທະວີກົນໄກການປະສານງານ ລະຫວ່າງ ສພຂ ກັບຄະນະ ສສຂ ແລະ ໜ່ວຍງານເສນາທິການຊ່ວຍວຽກຄະນະ ສສຂ ປະຈຳເມືອງ, ໃນການລົງເຜີຍແຜ່ແຕ່ລະຄັ້ງ ຫຼີກເວັ້ນປາກົດການໂຍນຄວາມຮັບຜິດຊອບ ລະຫວ່າງຂັ້ນແຂວງ ແລະ ຂັ້ນເມືອງ ພ້ອມທັງຈັດຕັ້ງປະຕິບັດດ້ວຍຄວາມຮັບຜິດຊອບ, ຄວາມຕັດສິນໃຈ ແລະ ຄວາມເປັນເອກະພາບສູງໃນຂອບເຂດທົ່ວແຂວງ, ສືບຕໍ່ເອົາໃຈໃສ່ຈັດຕັ້ງຜັນຂະຫຍາຍບັນດາຄາດໝາຍທີ່ວາງອອກ ທີ່ໄດ້ຫັນເປັນໂຄງການ, ແຜນງານອັນລະອຽດແລ້ວ ແລະ ໄດ້ມອບຄວາມຮັບຜິດຊອບໃຫ້ບັນດາຂະແໜງການທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດຢ່າງຈະແຈ້ງ ເພື່ອໃຫ້ການຈັດຕັ້ງປະຕິບັດຕົວຈິງຂອງແຕ່ລະຂະແໜງການຕ້ອງລົງເລິກຢ່າງຈິງຈັງແລະໃຫ້ເປັນຮູບປະທຳ. ນອກຈາກນັ້ນ, ຄະນະທີມງານ ສພຂ ແລະ ເມືອງ ຍັງໄດ້ລົງພົບປະໂອ້ລົມພໍ່ແມ່ປະຊາຊົນຈຳນວນ 4 ບ້ານຂອງ 2 ເມືອງຄື: ບ້ານນາຫວາຍ, ບ້ານເພຍເຫຼັກ ເມືອງບຸນໃຕ້ ແລະ ບ້ານຫ້ວຍທອງ, ບ້ານຢາງເໜືອ ເມືອງສຳພັນ.

ການລົງພົບປະຜູ້ມີສິດເລືອກຕັ້ງ ແລະ ຕິດຕາມກວດກາ ການຈັດຕັ້ງປະຕິບັດວຽກງານການເປັນເສນາທິການ ຂອງຄະນະ ສສຂ ປະຈຳເມືອງ ໃຫ້ແກ່ຄະນະປະຈຳ ສພຂ ຄັ້ງນີ້ ໄດ້ຮັບການສະໜັບສະໜູນໂດຍໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດ ແລະ ສພຂ (STEPs).

**(ພຸດສະດີ ແສງຈອມຄູນ)**

# ກອງປະຊຸມຮ່ວມລະຫວ່າງສະພາປະຊາຊົນ ກັບ ອົງການປົກຄອງແຂວງບໍ່ແກ້ວ



(ສພຊ) - ໂດຍປະຕິບັດຕາມແຜນການກະກຽມໃຫ້ແກ່ການເປີດກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາປະຊາຊົນແຂວງບໍ່ແກ້ວ ຊຸດທີ II; ໃນຕອນບ່າຍຂອງວັນທີ 23 ກໍລະກົດ 2024 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ ໄດ້ໄຂກອງປະຊຸມຮ່ວມລະຫວ່າງສະພາປະຊາຊົນແຂວງ ກັບອົງການປົກຄອງແຂວງ ເພື່ອປຶກສາຫາລືແລະເອກະພາບກ່ຽວກັບເນື້ອໃນທີ່ຈະນຳເຂົ້າພິຈາລະນາ, ຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ7ຂອງສະພາປະຊາຊົນແຂວງບໍ່ແກ້ວ ຊຸດທີ II ພາຍໃຕ້ການເປັນຄະນະປະທານຂອງທ່ານ ປອ. ທອງຈັນ ມະນີໄຊ ກຳມະການສູນກາງພັກ,ເລຂາຄະນະບໍລິຫານງານພັກແຂວງ, ເຈົ້າແຂວງບໍ່ແກ້ວ, ທ່ານ ຈອມສີ ລັດຕະນະປັນ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ, ມີບັນດາທ່ານສະມາຊິກສະພາປະຊາຊົນແຂວງ, ຫົວໜ້າ-ຮອງຫົວໜ້າພະແນການ, ອົງການລັດທຽບເທົ່າແຂວງ, ຫົວໜ້າ-ຮອງຫົວໜ້າຂະແໜງ ພ້ອມດ້ວຍພະນັກງານວິຊາການທີ່ກ່ຽວຂ້ອງເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມຮ່ວມຄັ້ງນີ້ ເພື່ອປຶກສາຫາລື ແລະ ເອກະພາບກັນບັນດາເນື້ອໃນຕ່າງໆທີ່ຈະນຳເຂົ້າພິຈາລະນາ, ຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ7ຂອງສະພາປະຊາຊົນແຂວງບໍ່ແກ້ວ ຊຸດທີ II ທີ່ຈະໄຂຂຶ້ນໃນຕໍ່ໜ້ານີ້; ວາລະດຽວກັນ ບັນດາທ່ານສະມາຊິກສະພາປະຊາຊົນແຂວງ, ບັນດາພະແນກການ, ອົງການລັດທຽບເທົ່າຂອງແຂວງທີ່ກ່ຽວຂ້ອງ ໄດ້ປະກອບຄຳຄິດເຫັນຕໍ່ກັບສະພາບການກະກຽມບັນດາເນື້ອໃນຕາມຄວາມຮັບຜິດຊອບຂອງຕົນ ເປັນຕົ້ນ ບົດລາຍງານຫຍໍ້ຂອງບັນດາພະແນກການ,ອົງການລັດທຽບເທົ່າຂອງແຂວງ ທີ່ທາງສະພາປະຊາຊົນແຂວງໄດ້ອອກແຈ້ງການແນະນຳເພື່ອກະກຽມຂຶ້ນລາຍງານ, ພິຈາລະນາ, ຮັບຮອງໃນກອງປະຊຸມສະພາປະຊາຊົນແຂວງທີ່ຈະໄຂຂຶ້ນໃນຕໍ່ໜ້າ ທັງນີ້, ກໍເພື່ອຄວາມເປັນເອກະພາບກັນລະຫວ່າງສະພາປະຊາຊົນແຂວງ ກັບອົງການປົກຄອງແຂວງ ແລະ ກະກຽມຄວາມພ້ອມບັນດາເນື້ອໃນໃຫ້ມີຄວາມຖືກຕ້ອງສົມບູນ, ຮັດກຸມ ແລະ ສຳເລັດທ່ວງທັນກັບເວລາຕາມຄາດໝາຍ.

ຕອນທ້າຍ, ທ່ານ ປອ. ທອງຈັນ ມະນີໄຊ ຍັງມີຄຳເຫັນຊີ້ນຳ ໃຫ້ບັນດາທ່ານທີ່ສັງກັດໃນອະນຸກຳມະການເນື້ອໃນຂອງແຕ່ລະພາກສ່ວນ ເປັນເຈົ້າການກະກຽມບັນດາເນື້ອໃນຕ່າງໆ ບົດລາຍງານຂອງຕົນໃຫ້ສຳເລັດ ແລະ ໃຫ້ມີຄຸນນະພາບທີ່ສຸດ ເພື່ອຮັບປະກັນຄວາມພ້ອມທີ່ຈະນຳເຂົ້າພິຈາລະນາ, ຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາປະຊາຊົນ ຊຸດທີ II ໃຫ້ທັນກັບເວລາທີ່ກຳນົດໄວ້.

**(ນາງ ຂັນຖະໜອມ ແກ້ວມະນີ)**

# ສພຂ ໄຊຍະບູລີ ເຝິກອົບຮົມການສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍ



(ສພຊ) - ໃນລະຫວ່າງວັນທີ 29-30 ກໍລະກົດ 2024 ທີ່ຫ້ອງປະຊຸມເມືອງຫົງສາ ແຂວງໄຊຍະບູລີ ໄດ້ຈັດກອງປະຊຸມເຝິກອົບຮົມການສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍ ໂດຍການເປັນປະທານຂອງທ່ານ ເພັງນິລັນ ຄຳພັນເພັງ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ (ສພຂ) ໄຊຍະບູລີ; ເຂົ້າຮ່ວມມີບັນດາສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 7 ແລະ ສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງ 11 ເມືອງ ໃນທົ່ວແຂວງ, ມີຫົວໜ້າ-ຮອງຫົວໜ້າພະແນກການ, ອົງການພ້ອມດ້ວຍນັກວິທະຍາກອນທີ່ມາຈາກຫ້ອງວ່າແຂວງ ແລະ ພະແນກຍຸຕິທຳແຂວງ ແລະ ພະນັກງານ-ວິຊາການພາຍໃນ ສພຂ ເຂົ້າຮ່ວມຢ່າງພ້ອມພຽງ.

ໃນການຈັດເຝິກອົບຮົມຄັ້ງນີ້, ກໍເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ສະມາຊິກສະພາປະຊາຊົນແຂວງ ແລະ ເສນາທິການຊ່ວຍວຽກຂອງ ສພຂ ພ້ອມທັງເປັນການຍົກລະດັບຄວາມຮູ້, ຄວາມສາມາດໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານໃນສາມພະລະບົດບາດຕົ້ນຕໍຂອງ ສພຂ ທີ່ໄດ້ກຳນົດໄວ້ ຄື ດ້ານນິຕິບັນຍັດແມ່ນສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍ,ດ້ານການຕົກລົງບັນຫາພື້ນຖານສຳຄັນຂອງແຂວງ ເປັນຕົ້ນແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດຂອງແຂວງ ແລະ ດ້ານການຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ ໃນການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມພາຍໃນແຂວງ ເຊິ່ງໃນກອງປະຊຸມແມ່ນໄດ້ຮັບຟັງການນຳສະເໜີ ແລະ ບັນຍາຍເນື້ອໃນເອກະສານຈາກນັກວິທະຍາກອນທີ່ມີຄວາມຮູ້, ຄວາມສາມາດ, ມີປະສົບການຕົວຈິງຈາກຂັ້ນແຂວງ ປະກອບມີ 2 ຫົວຂໍ້ ກວມເອົາ 6 ເນື້ອໃນຄື: ຄຳແນະນຳຂອງຄະນະປະຈຳ ສພຂ ກ່ຽວກັບຂັ້ນຕອນການສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍ ສະບັບເລກທີ 102/ຄປຈ.ຊຍ, ລົງວັນທີ 25 ກໍລະກົດ2023;ການສ້າງແຜນການສ້າງຂໍ້ຕົກລົງ, ການສ້າງຂໍ້ຕົກລົງ, ການພິຈາລະນາ ແລະ ຮັບຮອງເອົາຂໍ້ຕົກລົງ (ຂອງທ່ານເຈົ້າແຂວງ) ໂດຍ ສພຂ; ການປັບປຸງຂໍ້ຕົກລົງ ( ຂອງທ່ານເຈົ້າແຂວງ); ການກວດກາຄວາມສອດຄ່ອງຂອງຮ່າງຂໍ້ຕົກລົງໂດຍພະແນກຍຸຕິທຳແຂວງ; ການພິຈາລະນາຮ່າງຂໍ້ຕົກລົງໂດຍອົງການປົກຄອງແຂວງ ແລະ ການລົງລາຍເຊັນປະກາດໃຊ້ໂດຍເຈົ້າແຂວງ ແລະ ການສ້າງຮ່າງມະຕິກອງປະຊຸມ ສພຂ ແລະ ຮ່າງມະຕິກອງປະຊຸມຂອງຄະນະປະຈຳ ສພຂ; ຈາກນັ້ນ, ສຳມະນາກອນທີ່ເຂົ້າຮ່ວມກອງປະຊຸມກໍໄດ້ຄົ້ນຄ້ວາແລກປ່ຽນບົດຮຽນ ພ້ອມທັງປະກອບຄຳຄິດ-ຄຳເຫັນຢ່າງກົງໄປກົງມາໃນແຕ່ລະຫົວຂໍ້ທີ່ນຳມາສະເໜີເຮັດໃຫ້ມີເນື້ອໃນເລິກເຊິ່ງ ແລະ ສາມາດນຳໄປໝູນໃຊ້ເຂົ້າໃນວຽກງານຕົວຈິງໃຫ້ເກີດດອກອອກຜົນ ເຮັດໃຫ້ແຜນການຈັດເຝິກອົບຮົມໃນຄັ້ງນີ້ໄດ້ຮັບຜົນສຳເລັດຕາມຈຸດປະສົງ ແລະ ລະດັບຄາດໝາຍທີ່ວາງໄວ້.

ກອງປະຊຸມເຝິກອົບຮົມໃນຄັ້ງນີ້ ແມ່ນໄດ້ຮັບການສະໜັບສະໜູນໂດຍ: ການສ້າງຄວາມເຂັ້ມແຂງດ້ານການສ້າງນິຕິກຳ ແລະ ການສ້າງມະຕິຂອງ ສພຂ ໃຫ້ອົງການນິຕິບັນຍັດ ແລະ ອົງການປົກຄອງທ້ອງຖິ່ນ (STEPs).

**(ອິນທີ ຊຽວສີຟ້າ)**

# ແລກປ່ຽນບົດຮຽນວຽກງານຫໍສະໝຸດ ແລະ ເກັບກຳສະຖິຕິ



(ສພຊ) - ວັນທີ 1 ສິງຫາ 2024 ທີ່ສະພາແຫ່ງຊາດ ໄດ້ມີການແລກປ່ຽນບົດຮຽນການຈັດຕັ້ງປະຕິບັດວຽກງານຫໍສະໝຸດ ແລະ ເກັບກຳສະຖິຕິ ລະຫວ່າງສູນເຝິກອົບຮົມ ແລະ ຂໍ້ມູນຂ່າວສານ ຂອງສະຖາບັນຄົ້ນຄວ້ານິຕິກຳສະ ພາແຫ່ງຊາດ ກັບ ກົມວັນນະຄະດີ ແລະ ພິມຈຳໜ່າຍ ຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເຊິ່ງ ມີທ່ານ ນາງ ຄຳຫຼ້າ ສິດທະຈອນ ຮອງຫົວໜ້າສູນ, ທ່ານ ນາງ ພວງພັນ ພົມມີໄຊ ຮອງຫົວໜ້າກົມ ພ້ອມດ້ວຍພະນັກງານຂອງສອງພາກສ່ວນເຂົ້າຮ່ວມ ເຊິ່ງທັງສອງຝ່າຍໄດ້ລາຍງານຫຍໍ້ກ່ຽວກັບພາລະບົດບາດ, ສິດ ແລະ ໜ້າທີ່ ແລະ ການເຄື່ອນໄຫວປະຕິບັດວຽກງານໃນໄລຍະປີ 2023-2024 ແລະ ທິດທາງໃນຕໍ່ໜ້າຂອງການຈັດຕັ້ງຕົນໃຫ້ກັນ ແລະ ກັນຊາບ ພ້ອມທັງແລກປ່ຽນປະສົບການ, ຖາມ-ຕອບວຽກງານທີ່ຕ່າງຝ່າຍຕ່າງໃຫ້ຄວາມສົນໃຈ ໂດຍສະເພາະວຽກງານຫໍສະໝຸດ ແລະ ການເກັບກຳສະຖິຕິ.

ກົມວັນນະຄະດີ ແລະ ພິມຈຳໜ່າຍ ຍັງໄດ້ມອບປື້ມຈຳນວນໜຶ່ງໃຫ້ແກ່ສະພາແຫ່ງຊາດ ລວມມູນຄ່າ 1 ລ້ານກວ່າກີບ.

**(ນາງ ອາລິນ ສຸພົມມະປະກິດ)**

# ສະພາປະຊາຊົນແຂວງອັດຕະປື ປາຖະກະຖາວັນສຳຄັນຕ່າງໆຂອງຊາດ



(ສພຊ) - ສະພາປະຊາຊົນແຂວງອັດຕະປື ໄດ້ຈັດພິທີປາຖະກະຖາວັນເກີດປະທານ ສຸພານຸວົງ ຄົບຮອບ 115 ປີ, ວັນເຊັນສົນທິສັນຍາມິດຕະພາບການຮ່ວມມື ຄົບຮອບ 47 ປີ ແລະ ວັນສ້າງຕັ້ງສາຍພົວພັນການທູດລາວ-ຫວຽດນາມ ຄົບຮອບ 62 ປີ ໃນວັນທີ 6 ສິງຫາ 2024 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ ໂດຍການເປັນປະທານຂອງທ່ານ ນາງ ພອນມະນີ ຂຽນໄຊຍະວົງ ຮອງປະທານສະພາປະຊາຊົນແຂວງ, ມີທ່ານ ແຫວນຄຳ ປະທຸມມະແສງ ປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ, ທ່ານ ນາງ ຈັນທະລີ ສີສຸວົງ ປະທານຄະນະກຳມະການຍຸຕິທຳ ແລະປກຊ-ປກສ; ເຂົ້າຮ່ວມຮັບຟັງມີຄະນະພັກ, ຄະນະກຳມະການ, ຄະນະເລຂາທິການ, ສະມາຊິກພັກ, ພະນັກງານພາຍໃນສະພາປະຊາຊົນແຂວງເຂົ້າຮ່ວມ.

ໃນພິທີ ທ່ານແຫວນຄຳ ປະທຸມມະແສງ ໄດ້ທວນຄືນຊີວິດການເຄື່ອນໄຫວ ແລະ ຜົນງານທີ່ພົ້ນເດັ່ນຂອງປະທານ ສຸພານຸວົງ ໂດຍຫຍໍ້ວ່າ: ປະທານສຸພານຸວົງ ໄດ້ເຂົ້າສຶກສາຊັ້ນປະຖົມຢູ່ຫຼວງພະບາງ, ຊັ້ນມັດທະຍົມຢູ່ນະຄອນຫຼວງຮ່າໂນ້ຍ ສສ. ຫວຽດນາມ ແລະ ສຶກສາຕໍ່ລະດັບປະລິນຍາຕີ ສາຂາວິສະວະກຳກໍ່ສ້າງ ແລະ ຂົວທາງ ຢູ່ນະຄອນຫຼວງປາຣີ ປະເທດຝຣັ່ງ, ໄດ້ເຂົ້າຮ່ວມບັນດາຂະບວນການຕໍ່ສູ້ຢ່າງພິລະອາດຫານຕ້ານຈັກກະພັດພວກລ່າເມືອງຂຶ້ນແບບເກົ່າ ແລະ ແບບໃໝ່; ປະທານສຸພານຸວົງແມ່ນເປັນຜູ້ນຳທີ່ມີຄວາມຈົງຮັກພັກດີຕໍ່ອຸດົມການປະຕິວັດຢ່າງເດັດຂາດ, ຕໍ່ສູ້ຢ່າງພິລະອາດຫານບໍ່ຍອມຈຳນົນຍາມໃດກໍໄດ້ຍົກສູງສະຕິເປັນເຈົ້າຕໍ່ການຈັດຕັ້ງ, ນັບຖືໝູ່ຄະນະ, ເອື້ອເຟືອຮັກແພງມິດສະຫາຍຢ່າງຈິງໃຈ; ມີທັດສະນະຫຼັກໝັ້ນອັນໜັກແໜ້ນ ແລະ ນ້ຳໃຈເສຍສະຫຼະອັນສູງສົ່ງ ເພື່ອຊາດເພື່ອປະຊາຊົນ; ເປັນໜຶ່ງໃນບັນດາຜູ້ນຳທີ່ດີເດັ່ນ ແລະ ເຄົາລົບຮັກຂອງປະຊາຊົນລາວເຜົ່າຕ່າງໆ, ທ່ານໄດ້ອຸທິດໝົດຈິດໝົດໃຈ, ໝົດຄວາມສາມາດ ແລະ ຫົວຄິດປະດິດສ້າງຂອງຕົນໃຫ້ແກ່ພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ເພື່ອເອກະລາດ, ອະທິປະໄຕຂອງຊາດ ແລະ ຄວາມສົມບູນພູນສຸກຂອງປະຊາຊົນລາວບັນດາເຜົ່າ.

ຈາກນັ້ນ, ທ່ານ ນາງ ຈັນທະລີສີສຸວົງ ໄດ້ຍົກໃຫ້ເຫັນຄວາມໝາຍຄວາມສຳຄັນວັນເຊັນສົນທິສັນຍາມິດຕະພາບການຮ່ວມມືລາວ-ຫວຽດນາມ ຄົບຮອບ 47 ປີ (ວັນທີ 18 ກໍລະກົດ ປີ 1977-18 ກໍລະກົດ ປີ 2024) ແລະ ວັນສ້າງຕັ້ງສາຍພົວພັນການທູດລາວ-ຫວຽດນາມ ຄົບຮອບ 62 ປີ (ວັນທີ 5 ກັນຍາ 1962 ຫາ 5 ກັນຍາ ປີ 2024), ປະຫັວດສາດມູນເຊື້ອສາຍພົວພັນມິດຕະພາບອັນຍິ່ງໃຫຍ່ ເຊິ່ງສະແດງອອກຫຼາຍເຫດການທີ່ສຳຄັນທີ່ສອງພັກສອງລັດ ກໍຄືປະຊາຊົນສອງຊາດລາວ-ຫວຽດນາມ ທີ່ໄດ້ຮ່ວມສາມັກຄີກັນຕໍ່ສູ້ຕ້ານກັບຈັກກະພັດອາເມຣິກາ ເພື່ອກູ້ຊາດ, ກູ້ເອກກະລາດຂອງສອງປະເທດໃນເມື່ອກ່ອນ, ສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ລາວ-ຫວຽດນາມ ເຊິ່ງເປັນປັດໄຈອັນສຳຄັນຕັດສິນໄຊຊະນະຂອງການປະຕິວັດລາວ ແລະ ຫວຽດນາມ ໃນພາລະກິດຕໍ່ສູ້ປົດປ່ອຍຊາດ ໃນເມື່ອກ່ອນ ກໍຄືການສ້າງສາພັດທະນາຂອງສອງປະເທດໃນປັດຈຸບັນ.

ການປາຖະກະຖາຄັ້ງນີ້ກໍເພື່ອເປັນການສຶກສາອົບຮົມການເມືອງ-ແນວຄິດ ໃຫ້ສະມາຊິກພັກ, ພະນັກງານ-ລັດຖະກອນສະພາປະຊາຊົນແຂວງ ໄດ້ຮັບຮູ້, ເຊື່ອມຊຶມ ແລະ ກຳແໜ້ນກ່ຽວກັບບັນດາຜົນງານຂອງຜູ້ນຳພັກ-ລັດ ກໍຄືປະທານສຸພານຸວົງ ຜູ້ນຳທີ່ແສນເຄົາລົບຮັກຂອງພວກເຮົາໃນການຕໍ່ສູ້ກັບພວກລ່າເມືອງຂຶ້ນແບບເກົ່າ ແລະ ແບບໃໝ່ ທັງເປັນການສຶກສາອົບຮົມ, ການຮໍ່າຮຽນເອົາມູນເຊື້ອຮັກຊາດ, ຄວາມສາມັກຄີ, ນ້ຳໃຈຕໍ່ສູ້ກູ້ຊາດບໍ່ຍອມຈຳນົນອັນພິລະອາດຫານ, ນ້ຳໃຈເສຍສະຫຼະອັນສູງສົ່ງຂອງຜູ້ນຳພັກ-ລັດ ທີ່ມີຕໍ່ປະເທດຊາດ, ທັງພ້ອມກັນເປັນເຈົ້າການຮ່ວມມືໃນການແກ້ໄຂບັນຫາຄວາມຫຍຸ້ງຍາກທາງດ້ານເສດຖະກິດເອກະລາດເປັນເຈົ້າຕົນເອງໃນໄລຍະໃໝ່. ພ້ອມທັງເປັນການຈາລຶກບຸນຄຸນ,ຄຸນງາມຄວາມດີຂອງພັກ, ລັດ ແລະ ປະຊາຊົນອ້າຍນ້ອງທີ່ໄດ້ໃຫ້ການຊ່ວຍເຫຼືອອັນໃຫຍ່ຫຼວງ ແລະ ລ້ຳຄ່າ ໃນພາລະກິດປະຕິວັດແຫ່ງການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ, ປະຫວັດສາດ ມູນເຊື້ອທີ່ສຳຄັນຍິ່ງໃຫຍ່ລະຫວ່າງລາວ-ຫວຽດນາມ, ສືບຕໍ່ເສີມຂະຫຍາຍແລະປົກປັກຮັກສາໝາກຜົນຂອງການປະຕິວັດໄວ້ໃຫ້ໝັ້ນຄົງຍາວນານ, ທັງເປັນເຈົ້າການຖະນຸຖະໜອມເພີ່ມພູນຄູນສ້າງມູນເຊື້ອດັ່ງກ່າວໃຫ້ຈະເລີນງອກງາມຍິ່ງໆຂຶ້ນ.

ນອກຈາກນີ້, ໃນພິທີຍັງໄດ້ຮັບຟັງການເຜີຍແຜ່ຄຳແນະນຳກ່ຽວກັບການສ້າງຂະບວນການເພື່ອກະກຽມ ແລະ ດຳເນີນກອງປະຊຸມໃຫຍ່ 3 ຂັ້ນຂອງພັກ.

**(ວິນັດ ສີສຸລາດ)**





## ຄະນະປະຈຳ...

(ຕໍ່ຈາກໜ້າ 1)

ສໍ້ລາດບັງຫຼວງ, ກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ, ກົດໝາຍວ່າດ້ວຍການຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, ກົດໝາຍວ່າດ້ວຍການທ່ອງທ່ຽວ, ກົດໝາຍວ່າດ້ວຍສະຫະກອນ (ສ້າງໃໝ່), ກົດໝາຍວ່າດ້ວຍຊັບພະຍາກອນທີ່ເປັນຢາ (ສ້າງໃໝ່), ກົດໝາຍວ່າດ້ວຍການກັນ ແລະຄວບຄຸມເຊື້ອເອັດຈ໌ໄອວີ/ພະຍາດເອດ, ກົດໝາຍວ່າດ້ວຍການສະກັດກັ້ນ ແລະ ຕ້ານອັກຄີໄພ; ຜົນສຳເລັດການປະເມີນຜົນການຈັດຕັ້ງປະຕິບັດລັດຖະທຳມະນູນ ສະບັບປີ 2015 ຢູ່ 5 ຈຸດອ້ອມຂ້າງສູນກາງ ແລະ 18 ແຂວງ-ນະຄອນຫຼວງ; ໜັງສືສະເໜີຂອງລັດຖະບານ ກ່ຽວກັບການສະເໜີຂໍພິຈາລະນາຍົກເວັ້ນບາງມາດຕາຂອງລັດຖະບັນຍັດ ສະບັບເລກທີ 002/ປປທ, ລົງວັນທີ 17 ມິຖຸນາ 2021 ຜົນປະໂຫຍດຂອງລັດຖະບານແລະການເປີດບັນຊີສຳຮອງຂອງໂຄງການຄຸ້ມຄອງຍານພາຫະນະ ແລະ ການຂົນສົ່ງແບບຄົບວົງຈອນທີ່ຕິດພັນກັບໂຄງການ; ໜັງສືສະເໜີຂອງລັດຖະບານ ກ່ຽວກັບການສະເໜີການຂໍຫັນປ່ຽນປະເພດທີ່ດິນປ່າທຳມະຊາດໄປເປັນດິນອຸດສາຫະກຳລັກສະນະຖາວອນເພື່ອຮັບໃຊ້ໃນໂຄງການສາຍສົ່ງໄຟຟ້າແຮງສູງ 500 ກວ ແຕ່ສະຖານີບ້ານຫາດ-ບ້ານນາ ແຂວງຈຳປາສັກ ທາສະຖານນີພູວົງ ແຂວງອັດຕະປື ຂອງບໍລິສັດ YEIG international EngineeringCO.Ltd; ຄວາມຄືບໜ້າກ່ຽວກັບການຜະລິດຫົວອາຫານສັດ ແລະ ແນວພັນພືດ ຕາມມະຕິແຜນພັດທະນາເສດຖະກິດ-ສັງຄົມ ປະຈຳປີ 2023 ແລະ 2024; ທົບທວນ ແລະ ປະເມີນຄືນການຈັດຕັ້ງປະຕິບັດມະຕິຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການຮັບຮອງມາດຕະການຮັກສາສະຖຽນລະພາບຂອງລາຄານ້ຳມັນເຊື້ອໄຟໃນສະພາບລາຄານ້ຳມັນເຊື້ອໄຟເໜັງຕີງສູງຂຶ້ນ; ການຈັດຕັ້ງປະຕິບັດມະຕິຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາການປັບຫຼຸດອັດຕາພາສີຂາເຂົ້ານ້ຳມັນແນຟຕາ (Naphtha) ເພື່ອນຳໃຊ້ເຂົ້າໃນການປະສົມ ແລະປຸງແຕ່ງນ້ຳມັນແອັດຊັງທຳມະດາ ເປັນການທົດລອງ 6 ເດືອນ ຂອງບໍລິສັດ ຍອດງື່ມ ພາວເວີ ມະຫາຊົນ; ການຄົ້ນຄວ້າການສະເໜີແຕ່ງຕັ້ງບຸຄະລາກອນຂອງສານ; ສະຖິຕິຄຳຮ້ອງຂໍຄວາມເປັນທຳຂອງຄະນະປະຈຳສະພາແຫ່ງຊາດ ແລະ ກົນໄກການພິຈາລະນາຄຳຮ້ອງຂໍຄວາມເປັນທຳຂອງກຳມາທິການຍຸຕິທຳ; ການກະກຽມຄວາມພ້ອມກອງປະຊຸມຮ່ວມລະຫວ່າງຄະນະປະຈຳສະພາແຫ່ງຊາດກັບຄະນະລັດຖະບານ.

ນອກຈາກນີ້, ຍັງໄດ້ຮັບຟັງການລາຍງານຄວາມຄືບໜ້າໃນການກະກຽມການເປັນເຈົ້າກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ ຄັ້ງທີ 45; ການຂໍພິຈາລະນາຮັບເອົາປະເທດສັງເກດການ 2 ປະເທດຄື: ບາເຣນ ແລະ ເຢຍລະມັນ ພ້ອມທັງພິຈາລະນາການສະເໜີຂອງປະເທດອານເຊຣີ ເປັນແຂກຖືກເຊີນຂອງປະເທດເຈົ້າພາບ, ພິຈາລະນາຜູ້ທີ່ມີຜົນງານດີເດັ່ນຈາກສະພາແຫ່ງຊາດລາວ ເພື່ອຮັບລາງວັນກຽດຕິຄຸນຂອງໄອປາ. ການຂໍທິດຊີ້ນຳກ່ຽວກັບການມີສ່ວນຮ່ວມຂອງກຳມາທິການວັດທະນະທຳ-ສັງຄົມໃນຂະບວນການປຸກລະດົມຂົນຂວາຍນັກຮຽນ, ນັກສຶກສາ ເຂົ້າມາຮຽນໃນທຸກຊັ້ນທຸກສາຍ ໃນສົກປີຮຽນ 2024-2025 ໃຫ້ເພີ່ມຂຶ້ນ; ຂໍທິດຊີ້ນຳກ່ຽວກັບການຮ່າງມະຕິວ່າດ້ວຍການເພີ່ມທະວີການຮ່ວມມືໃນການສ້າງໃຫ້ອາຊຽນປອດຄວັນຢາສູບແລະປອດການຊົມໃຊ້ສານນິໂຄຕິນ ທີ່ຈະນຳເຂົ້າກອງປະຊຸມໄອປາ ຄັ້ງທີ 45 ທີ່ ສປປ ລາວ ເປັນເຈົ້າພາບ.

ກອງປະຊຸມຍັງໄດ້ຜ່ານຮ່າງມະຕິຂອງຄະນະປະຈຳສະພາແຫ່ງຊາດ ກ່ຽວກັບການປ່ຽນຊື່ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ, ເຈົ້າເມືອງ, ເຈົ້ານະຄອນ ແລະ ນາຍບ້ານ ເປັນປະທານຄະນະກຳມະການປົກຄອງ; ຜ່ານແບບປຶ້ມທີ່ລະນຶກເພື່ອແຈກຢາຍໃນກອງປະຊຸມໄອປາ ຄັ້ງທີ 45 ແລະ ພິຈາລະນາຄຳຮ້ອງຂໍຄວາມເປັນທຳ 1 ເລື່ອງ.

**(ຂ່າວ: ນາງ ກຸກກິກ ບຸດດາໄຊ, ພາບ: ສອນສັກ ວັນວິໄຊ)**

## ເຝິກອົບຮົມ...

(ຕໍ່ຈາກໜ້າ 1)

ແຂວງ: ນະຄອນ ຫຼວງວຽງຈັນ, ຜົ້ງສາລີ, ຫຼວງນ້ຳທາ, ອຸດົມໄຊ, ບໍ່ແກ້ວ, ຫຼວງພະບາງ, ໄຊຍະບູລີ, ຫົວພັນ, ຊຽງຂວາງ, ວຽງຈັນ ແລະ ໄຊສົມບູນ ໄດ້ຈັດຂຶ້ນໃນວັນທີ 5-6 ສິງຫາ 2024 ທີ່ເມືອງວັງວຽງ ແຂວງວຽງຈັນ ໂດຍການເປັນປະທານຂອງທ່ານ ສົມມາດ ພົລເສນາ ຮອງປະທານສະພາແຫ່ງຊາດ, ຜູ້ຊີ້ນຳວຽກງານເສດຖະກິດ.

ຈຸດປະສົງແມ່ນເພື່ອສ້າງຄວາມຮັບຮູ້ ແລະ ຄວາມເຂົ້າໃຈຕໍ່ວຽກງານການປະເມີນຜົນກະທົບທາງດ້ານສິ່ງແວດລ້ອມ, ສັງຄົມ ແລະ ທຳມະຊາດ ໃຫ້ແກ່ສະມາຊິກສະພາ ແລະ ວິຊາການ ໃນການຄົ້ນຄວ້າ, ວິເຄາະ, ວິໄຈ ແລະ ສັງລວມບັນຫາຕ່າງໆໃຫ້ແກ່ຄະນະປະຈຳສະພາແຫ່ງຊາດ (ຄປຈສພຊ) ແລະ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ; ແລກປ່ຽນບົດຮຽນ, ຂໍ້ມູນກ່ຽວກັບການຈັດຕັ້ງປະຕິບັດວຽກງານການປະເມີນຜົນກະທົບທາງດ້ານສິ່ງແວດລ້ອມ, ສັງຄົມ ແລະ ທຳມະຊາດ ຂອງບັນດາໂຄງການລົງທຶນ ທັງເປັນການສ້າງຄວາມເຂັ້ມແຂງທາງດ້ານວິຊາການໃຫ້ແກ່ພະນັກງານຂອງ ສພຊ ແລະ ສພຂ.

ທ່ານ ສົມມາດ ພົລເສນາ ໄດ້ມີຄຳເຫັນກ່າວເປີດກອງປະຊຸມວ່າ: ຕະຫຼອດໄລຍະຜ່ານມາ ຄະນະປະຈຳສະພາແຫ່ງຊາດ ໄດ້ຖືສຳຄັນວຽກງານຍົກສູງຂີດຄວາມສາມາດໃຫ້ແກ່ສະມາຊິກສະພາ ແລະ ວິຊາການທີ່ເປັນເສນາທິການໃຫ້ ສພຊ ແລະ ສພຂ ໂດຍມີການຊຸກຍູ້, ສົ່ງເສີມ ແລະ ອຳນວຍຄວາມສະດວກໃຫ້ແກ່ວຽກງານຍົກສູງສ້າງຄວາມສາມາດ ໃຫ້ໄດ້ຮັບການຈັດຕັ້ງປະຕິບັດຢ່າງຕໍ່ເນື່ອງ ແນໃສ່ຮັບປະກັນການປະຕິບັດພາລະບົດບາດຂອງ ສສຊ ແລະ ສສຂ ກໍຄືຂອງ ສພຊ ແລະ ສພຂ ໃຫ້ມີປະສິດທິພາບ ແລະ ມີປະສິດທິຜົນສູງຂຶ້ນເລື້ອຍໆ ໂດຍສະເພາະການສ້າງ, ປັບປຸງກົດໝາຍ, ນິຕິກຳໃຕ້ກົດໝາຍ (ດ້ານນິຕິບັນຍັດ), ການຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ ແລະ ຂອງທ້ອງຖິ່ນ, ການຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ຂອງບັນດາອົງການຈັດຕັ້ງລັດຂັ້ນຕ່າງໆຜ່ານ ສພຊ ແລະ ສພຂ; ດ້ວຍເຫດນີ້, ຈຶ່ງມີຄວາມຈຳເປັນຕ້ອງໄດ້ເຝິກອົບຮົມຍົກສູງສ້າງຂີດຄວາມສາມາດແລະຄວາມຮັບຮູ້ທາງດ້ານວິຊາການສະເພາະດ້ານໃຫ້ແກ່ສະມາຊິກສະພາ ແລະວິຊາການທີ່ກ່ຽວຂ້ອງ ໃຫ້ເລິກເຊິ່ງ ແລະ ກວ້າງຂວາງຫຼາຍຂຶ້ນກວ່າເກົ່າ.

ໃນກອງປະຊຸມ, ທ່ານ ນາງ ປິ່ງຄຳ ລາຊະສິມມາ ປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ໄດ້ເຜີຍແຜ່ມະຕິຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍຂັ້ນຕອນການພິຈາລະນາແຜນພັດທະນາພະລັງງານໄຟຟ້າແລະແຮ່ທາດແຫ່ງຊາດ, ໂຄງການສຳປະທານພັດທະນາໄຟຟ້າ, ບໍ່ແຮ່ ແລະ ໂຄງລ່າງພື້ນຖານ ສະບັບເລກທີ 02/ຄປຈ, ລົງວັນທີ 06/01/2022; ຮັບຟັງການສະເໜີບົດຈາກຜູ້ຕາງໜ້າຂອງກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງ ແວດລ້ອມ ໃນຫົວຂໍ້: ຂັ້ນຕອນ ແລະ ການປະເມີນລາຄາທີ່ດິນ; ຂັ້ນຕອນ ແລະ ວິທີການຄົ້ນຄວ້າກ່ຽວກັບການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ, ສັງຄົມ ແລະ ທຳມະຊາດ ທີ່ຕິດພັນກັບການພັດທະນາໂຄງການ ເຊັ່ນ: ໂຄງການພະລັງງານໄຟຟ້າ, ໂຄງການຂຸດຄົ້ນແຮ່ທາດ ແລະ ການພັດທະນາໂຄງລ່າງພື້ນຖານ; ຂັ້ນຕອນແລະວິທີການຄົ້ນຄວ້າລາຄາຫົວໜ່ວຍຊົດເຊີຍຕໍ່ຜົນກະທົບຕໍ່ສິ່ງແວດລ້ອມ, ສັງຄົມ ແລະ ທຳມະຊາດ. ຈາກນັ້ນ, ຜູ້ເຂົ້າຮ່ວມໄດ້ສຸມໃສ່ຄົ້ນຄວ້າ, ປະກອບຄຳຄິດຄຳເຫັນ ແລະ ສົນທະນາແລກປ່ຽນບົດຮຽນເຊິ່ງກັນແລະກັນຢ່າງກົງໄປກົງມາ.

ກອງປະຊຸມຄັ້ງນີ້ ໄດ້ຮັບການສະໜັບສະໜູນຊ່ວຍເຫຼືອທາງດ້ານງົບປະມານຈາກໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ຫຼືສະເຕັບສ໌ (STEPs) ໂດຍຜ່ານກອງເລຂາຄຸ້ມຄອງແຫຼ່ງທຶນຊ່ວຍເຫຼືອລ້າໃຫ້ແກ່ສະພາແຫ່ງຊາດ.

**(ສອນສັກ ວັນວິໄຊ)**

## ກອງປະຊຸມປຶກສາ...

(ຕໍ່ຈາກໜ້າ 1)

ປະທານສະພາແຫ່ງຊາດ ແລະ ທ່ານ ນາງ ຊີຕີ ໂຣໄຊເມຣີຍັນຕີ ດາໂຕະ ຮາຈີ ອັບດຸນ ຣາມັນ (SitiRozaimeriyantyDato Haji Abdul Rahman) ເລຂາທິການໃຫຍ່ໄອປາ; ພາຍຫຼັງມີພິທີເປີດຢ່າງເປັນທາງການແລ້ວ, ທ່ານ ພອນສານ ວິໄລເມັ້ງ ສະມາຊິກສະພາແຫ່ງຊາດ ໃນຖານະເປັນປະທານກອງປະຊຸມຄະນະສະມາຊິກລັດຖະສະພາໜຸ່ມໄອປາ ພ້ອມດ້ວຍສະມາຊິກລັດຖະສະພາໜຸ່ມໄອປາຈາກບັນດາລັດຖະສະພາອາຊຽນແລະ3ອົງການຈັດຕັ້ງພາກພື້ນຄື: ເຈົ້າໜ້າທີ່ອາວຸໂສຂອງກອງປະຊຸມຊາວໜຸ່ມອາຊຽນ (ASEAN Senior Officials Meeting Youth), ຕາງໜ້າຈາກມູນນິທິອາຊຽນ (ASEANFoundation) ແລະ ຕາງໜ້າຈາກສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ (Lao Youth Union) ເຂົ້າຮ່ວມຈຳນວນ 30 ທ່ານ.

ໃນພິທີເປີດ, ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ໄດ້ມີຄຳເຫັນເນັ້ນໜັກວ່າ: ຊາວໜຸ່ມເປັນກຳລັງແຮງທີ່ສຳຄັນໃນການຂັບເຄື່ອນການພັດທະນາເສດຖະກິດ, ສັງຄົມ ແລະ ການເມືອງຢູ່ພາກພື້ນອາຊຽນ ກໍຄືໃນທົ່ວໂລກ; ໄດ້ຕີລາຄາສູງຕໍ່ບົດບາດຂອງຊາວໜຸ່ມທີ່ມີສ່ວນຮ່ວມກຳນົດວິໄສທັດ, ນະໂຍບາຍ ແລະ ການວາງຍຸດທະສາດເພື່ອຮັບມືກັບສິ່ງທ້າທາຍໃນອະນາຄົດ ແລະ ປະກອບສ່ວນຢ່າງຫ້າວຫັນແລະສຳຄັນໃນການຈັດຕັ້ງປະຕິບັດວິໄສທັດການສ້າງປະຊາຄົມອາຊຽນ 2025 ແລະ ເປົ້າໝາຍການພັດທະນາແບບຍືນຍົງຂອງສະຫະປະຊາຊາດ 2030. ທ່ານຮອງປະທານສະພາແຫ່ງຊາດ ໃນນາມຕາງໜ້າສະພາແຫ່ງຊາດລາວ ແລະ ປະທານໄອປາ ໄດ້ສະແດງຄວາມຊົມເຊີຍຕໍ່ຄະນະສະມາຊິກລັດຖະສະພາໜຸ່ມລາວ ທີ່ໄດ້ປະສານສົມທົບກັບກອງເລຂາໄອປາກະກຽມຫົວຂໍ້ກອງປະຊຸມສະມາຊິກລັດຖະສະພາໜຸ່ມໄອປາໃນປີນີ້ ພາຍໃຕ້ຫົວຂໍ້: "ສ້າງຄວາມເຂັ້ມແຂງໃຫ້ແກ່ຊາວໜຸ່ມໃນການສ້າງປະຊາຄົມອາຊຽນທີ່ປອດໄພ, ເຂັ້ມແຂງ ແລະ ກວມລວມ (Empowering Youth in Building a Secure, Resilient, and Inclusive ASEANCommunity)" ເຊິ່ງເປັນການສົ່ງເສີມໃຫ້ຊາວໜຸ່ມມີສ່ວນຮ່ວມຫຼາຍຂຶ້ນໃນການສ້າງປະຊາຄົມອາຊຽນ ທັງສອດຄ່ອງກັບຫົວຂໍ້ກອງປະຊຸມໃຫຍ່ໄອປາ ແລະ ຫົວຂໍ້ການເປັນປະທານອາຊຽນຂອງ ສປປ ລາວ ໃນປີນີ້.

ໃນນາມຕາງໜ້າປະທານໄອປາ, ທ່ານຮອງປະທານສະພາແຫ່ງຊາດລາວ ໄດ້ສະເໜີໃຫ້ກອງປະຊຸມແຕ່ງຕັ້ງທ່ານ ພອນສານ ວິໄລເມັ້ງ ເປັນປະທານກອງປະຊຸມຄະນະສະມາຊິກລັດຖະສະພາໜຸ່ມໄອປາ. ໃນກອງປະຊຸມຄັ້ງນີ້, ບັນດາຜູ້ເຂົ້າຮ່ວມໄດ້ຮັບຟັງການນຳສະເໜີບົດຈາກຕາງໜ້າຄະນະສະມາຊິກສະພາແຫ່ງຊາດໜຸ່ມລາວ ໃນຫົວຂໍ້ "ສ້າງຄວາມເຂັ້ມແຂງໃຫ້ແກ່ຊາວໜຸ່ມໃນການສ້າງປະຊາຄົມອາຊຽນທີ່ປອດໄພ, ເຂັ້ມແຂງ ແລະກວມລວມ" ສະເໜີໂດຍທ່ານ ຄຳປະສິດ ເທບວົງສາ ຮອງປະທານຄະນະສະມາຊິກລັດຖະສະພາໜຸ່ມໄອປາ, ຈາກນັ້ນ ໄດ້ມີການປະກອບຄຳເຫັນຈາກທ່ານ ທອງລິສິສຸລິດ ຮອງເລຂາຄະນະບໍລິຫານງານສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ, ຕາງໜ້າເຈົ້າໜ້າທີ່ອາວຸໂສຂອງກອງປະຊຸມຊາວໜຸ່ມອາຊຽນແລະຕາງໜ້າຈາກມູນນິທິອາຊຽນ; ຮັບຟັງຄຳຄິດເຫັນ ແລະ ຄຳແນະນຳທີ່ກ່ຽວຂ້ອງຕໍ່ກັບຫົວຂໍ້ຂອງ YPA ຈາກຜູ້ຕາງໜ້າສະມາຊິກລັດຖະສະພາໜຸ່ມຈາກປະເທດ ບຣູໄນ, ກຳປູເຈຍ, ອິນໂດເນເຊຍ, ມາເລເຊຍ, ຟີລິບປິນ, ສິງກະໂປ, ໄທ ແລະ ຫວຽດນາມ ຕາມລຳດັບ. ພ້ອມທັງຮັບຟັງບົດສະເໜີໂດຍເລຂາທິການໃຫຍ່ໄອປາ ກ່ຽວກັບຂໍ້ລິເລີ່ມຂອງກອງເລຂາໄອປາ ໃນການສົ່ງເສີມການມີສ່ວນຮ່ວມ ແລະ ການເຂົ້າຮ່ວມຂອງຊາວໜຸ່ມໃນວຽກງານລວມຂອງໄອປາ.

ຕອນບ່າຍຂອງວັນດຽວກັນ, ທ່ານເລຂາທິການໃຫຍ່ໄອປາ ຍັງໄດ້ພົບປະຫາລືກັບທ່ານ ນາງ ອຳໄພວອນ ລ້ອມບຸນແພງ ເລຂາທິການສະພາແຫ່ງຊາດ ກ່ຽວກັບວຽກງານການກະກຽມໃຫ້ແກ່ກອງປະຊຸມໃຫຍ່ໄອປາ ຄັ້ງທີ 45 ທີ່ ສປປ ລາວ ຈະເປັນເຈົ້າພາບໃນເດືອນຕຸລານີ້.

**(ນາງ ອາລິນ ສຸພົມມະປະດິດ)**




# ເຫຼົາລູກໜ້າເຕັມກຳມືໄດ້ລູກໜຶ່ງ ລົນໄຟເບັດຊື່ນລ້ວວາງໄວ້ພັດຄົດຄືນ

**# ດົ້ນກົບເມກ**

ເມື່ອເວົ້າເຖິງຜະຫຍາພາສິດບູຮານລາວນັ້ນ ນັກປາດເພິ່ນສອນແຍກໄວ້ຫຼາຍໝວດເຊັ່ນ: ໝວດໃຫ້ຂະຫຍັນທຳມາຫາກິນກໍວ່າ: ໃຫ້ຕື່ນເດິກຄືກາ ຫາກິນຄືໄກ່ ຫຼື ໄປຢຽບໝາ ມາຢຽບຂຽດ ຄັນວ່າໝວດສ້າງຕົວເອງກໍມີເຊັ່ນວ່າ: ໃຫ້ຊ່າງກໍ່ຊ່າງອິ້ນຄືປວກເຮັດຮັງ, ໃຫ້ເຈົ້າເອົາຍາວໄວ້ຄືສິນໄຊຟັນໄຮ່ ປີນີ້ໄດ້ແຕ່ປົ້ງ ປີໜ້າຈຶ່ງຄ່ອຍຮອນ, ໝວດຕັກເຕືອນກໍມີເຊັ່ນວ່າ: ຄັນໄດ້ກິນລາບກ້ອຍ ຢ່າລືມແຈ່ວແພວຜັກ ຄັນໄດ້ກິນພາເງິນພາຄຳ ກໍຢ່າລືມກະບຽນຮ້າງ.

ສຳລັບພາສິດຫົວຂໍ້ຂ້າງເທິງນັ້ນ ມັນກ່ຽວຂ້ອງກັບການປົກຄອງທີ່ເອົາໃຈໃສ່ສ້າງຄົນ, ສ້າງຊັບພະຍາກອນມະນຸດໃຫ້ເກັ່ງດີມີຄຸນນະທຳ, ຜູ້ຂຽນສັງເກດວ່າ: ສ້າງຄົນໃຫ້ເກັ່ງນັ້ນບໍ່ຍາກປານໃດ ແຕ່ສ້າງໃຫ້ຄົນເກັ່ງເປັນຄົນດີຍາກກວ່າ ເພາະໃນສັງຄົມເຮົາປາກົດເຫັນຄົນເກັ່ງຫຼາຍ ແຕ່ບໍ່ໄດ້ສ້າງປະໂຫຍດແກ່ສ່ວນລວມເທົ່າທີ່ຄວນ ເຊິ່ງບາງກໍລະນີ ກໍສະແດງອອກຢູ່ບ່ອນຫົວຂໍ້ພາສິດຂ້າງເທິງນັ້ນ ເຊິ່ງຜູ້ປົກຄອງ ຫຼື ຫົວໜ້າພຽນສ້າງຢາກໃຫ້ເກັ່ງດີ ເບິ່ງຄືວ່າບັ້ນຕົ້ນກໍເປັນແນວນັ້ນແທ້ ແຕ່ພໍຜ່ານໜ້າວຽກຈົນມີຖານະຕຳແໜ່ງປາລະມີສູງຂຶ້ນ ບຸກຄົນທີ່ວ່ານັ້ນກໍປ່ຽນທາດຂາດຄຸນ ເມື່ອໄດ້ພົບກັບອຳນາດວາດສະໜາຊັບສິນເງິນຄຳ ມັນຊັກຈູງພາໄປເຊິ່ງບໍ່ຕ່າງກັບເວລາຄົນເຮົາສ້າງລູກໜ້າໄວ້ໃຊ້ເວລາເຫຼົາໃຫ້ງາມເບັດໃຫ້ຊື່ລົນໄຟໄວ້ແລ້ວພໍຜ່ານການເວລາໄລຍະໜຶ່ງ ລູກໜ້າດັ່ງກ່າວກັບຄົດຄືນ ນີ້ຄືປາກົດການ ຄົນບູຮານຍົກມາເປັນອຸທາຫອນສອນໃຈກ່ຽວກັບຄົນ; ປຽບທຽບໃສ່ຄົນເຮົາວ່າມີມື້ຍາມປ່ຽນທາດຂາດຄຸນໄດ້ຄືກັນ ເວົ້າສະເພາະໃນຍາມເຂົ້າຍາກໝາກແພງ ເສດຖະກິດຝືດເຄືອງ ເຊິ່ງທຽບໄດ້ກັບສຸພາສິດທີ່ວ່າ: ບ້ານເມືອງຂ້ອນຂຸນ ກວານຍາດໄພ່ເມືອງເໜືອ ໄດ້ໄກ່ໂຈ້ນເມືອງໃຕ້ ໄດ້ໄກ່ຍອງເມືອງຊອງ ໄດ້ໄກ່ແຈ້ ຄືຊິແພ້ໄພ່ເມືອງ.

ຜູ້ຂຽນພະຍາຍາມຍົກເອົາພາສິດບູຮານມາແລກປ່ຽນເພື່ອໃຫ້ໄດ້ຄິດທົບທວນ ຊ່ວຍກັນເຖິງຄຳບູຮານສອນໄວ້ວ່າອັນໃດມີຄ່າມີປະໂຫຍດ ອັນໃດມີຄຸນມີໂທດຫຼາຍໜ້ອຍພຽງໃດ ກໍຍັງດີກວ່າບໍ່ມີຫຼັກຄິດເພື່ອບ້ານເມືອງພາຍໜ້າ !.






# ລາດເລົາ- ຈັງຫວະ-ໂອກາດ

'ລາດເລົາ' ເປັນຄຳນາມ ບໍ່ປາກົດເຫັນບັນທຶກໄວ້ໃນວັດຈະນານຸກົມພາສາລາວສະບັບໃດ ນອກຈາກວັດຈະນານຸກົມລາວ-ຝຣັ່ງ ເຫຼັ້ມ 2 (Dictionnaire Lao-Français Tom 2) ປີ 1970 ໄດ້ບັນທຶກໄວ້ ໂດຍໃຫ້ຄວາມໝາຍເປັນພາສາຝຣັ່ງວ່າ la trace, l'indice ແລະມີວົງເລັບຊ້ອນທ້າຍວ່າ (Si.) ເຊິ່ງໝາຍເຖິງເປັນຄຳທີ່ມີຈາກສະຫຍາມ ຫຼື ໄທ. ເວລານຳມາໃຊ້ຕົວຈິງ 'ລາດເລົາ' ມີຄວາມໝາຍວ່າ "ທ່ວງທ່າ, ທ່າທີ, ຊ່ອງທາງ, ໂອກາດເໝາະ" ເຊັ່ນ

- ຕຳຫຼວດເບິ່ງລາດເລົາກ່ອນຊິເຂົ້າໄປຈັບພວກຄ້າຢາບ້າ.
- ທີມງານສ້າງຮູບເງົາໄດ້ລົງໄປເບິ່ງບັນຍາກາດແລະລາດເລົາຂອງສະຖານທີ່ແຫ່ງນັ້ນ ກ່ອນຈະລົງມືຖ່າຍທຳຕົວຈິງ.
- ຫຼັງຈາກທີ່ຂົວມິດຕະພາບລາວ-ໄທແຫ່ງທີ 3 ຄຳມ່ວນ-ນະຄອນພະນົມ ເປີດໃຊ້ຢ່າງເປັນທາງການ ເຮັດໃຫ້ຊາວໄທສົນໃຈເຂົ້າໄປເບິ່ງລາດເລົາການລົງທຶນໃນເຂດເສດຖະກິດພິເສດພູຂຽວ.

'ຈັງຫວະ' ເປັນຄຳນາມ ອາດໄດ້ເຄົ້າມາຈາກພາສາຂະແມ ຈັງວາກ ແລ້ວແຜງສຽງເປັນ 'ຈັງຫວະ' ໝາຍເຖິງ "ໄລຍະທີ່ສະໝ່ຳສະເໝີ" ເຊັ່ນ

- ຫົວໃຈເຕັ້ນເປັນຈັງຫວະ.
- ເວລາທີ່ເຮົາຕື່ນເຕັ້ນ ເຮັດໃຫ້ຫົວໃຈເຕັ້ນບໍ່ເປັນຈັງຫວະ.

'ຈັງຫວະ' ຍັງໝາຍເຖິງ "ໄລຍະທີ່ກຳນົດໄວ້ເປັນຕອນໆ" ເຊັ່ນ

- ເພງລາວເດີມມີຈັງຫວະຊ້າ, ແຕ່ເພງສະໄໝໃໝ່ບາງເພງ ມີຈັງຫວະໄວ.

'ຈັງຫວະ' ຍັງໝາຍເຖິງ "ໂອກາດອັນຄວນ" ເຊັ່ນ

- ລາວມັກເວົ້າຂັດຈັງຫວະໝູ່ຕະຫຼອດ.
- ພວກເຮົາກຳລັງລົມກັນມ່ວນໆ ແຕ່ລາວມາຂັດຈັງຫວະ ເຮັດໃຫ້ເສຍຄວາມຮູ້ສຶກ.
- ນັກວິເຄາະເສດຖະກິດຄາດວ່າ ຈັງຫວະເຕີບໂຕຂອງເສດຖະກິດຂອງປະເທດກຳລັງພັດທະນາໃນປີໜ້າຈະບັນລຸຕາມລະດັບຄາດໝາຍ.

'ໂອກາດ' ເປັນຄຳນາມຈາກເຄົ້າປາລີ Okāsa ໂອກາສະ ແຜງສຽງເປັນຄຳລາວວ່າ 'ໂອກາດ' ໝາຍເຖິງ "ເວລາທີ່ເໝາະສົມ, ເວລາທີ່ເໝາະສົມກັບຈັງຫວະພໍດີ, ຊ່ອງທາງ, ປ່ອງທາງ" ເຊັ່ນ

- ລາວບໍ່ມີໂອກາດໄດ້ໄປຮຽນຕໍ່.
- ເປັນໂອກາດດີທີ່ໄດ້ມາພົບພໍ້ກັນ.
- ຂ້ອຍຢາກຫາໂອກາດໄປລົມວຽກກັບເຈົ້າ.
- ເຈົ້າເຮັດວຽກຢູ່ນີ້ ໂອກາດຊິກ້າວໜ້າກ້າວຕາມີຫຼາຍ.

**# ຂໍ້ສັງເກດ:** ຄຳວ່າ 'ລາດເລົາ' ຈຳນວນຖີ່ໃນການໃຊ້ແມ່ນມີໜ້ອຍ ພ້ອມກັນນັ້ນບາງຄົນກໍອອກສຽງພ້ຽນເປັນ 'ລາດລາວ'.




# ວິທີເຮັດວຽກ

**ພາກທີ 6**
**ວິທີນຳ**

ບໍ່ວ່າວຽກການອັນໃດ ຈະເປັນການຕໍ່ສູ້, ການເພີ່ມພູນຜະລິດຜົນ, ການສຶກສາອົບຮົມ ການກວດກາ ຫຼື ອື່ນໆກໍຕາມ, ເມື່ອໃດຫາກມີກິດຈະການແນວໃດພົວພັນເຖິງພະແນກໜຶ່ງຂອງຊັ້ນຕ່ຳ-ນັ້ນ, ອົງການນຳຊັ້ນສູງກໍຕ້ອງຕິດຕໍ່ເວົ້ານຳຜູ້ຮັບຜິດຊອບທົ່ວໄປ-ຂອງອົງການນຳຊັ້ນຕ່ຳສະເໝີ. ເຮັດແນວນັ້ນຈຶ່ງປະຕິບັດຕາມຈຸດປະສົງແບ່ງວຽກງານກັນແຕ່ເປັນເອກະພາບກັນ, ບໍ່ຄວນປ່ອຍໃຫ້ ພາກສ່ວນໃດພາກສ່ວນໜຶ່ງ ທີ່ຂຶ້ນກັບອົງການນຳຊັ້ນສູງ ໄປຕິດຕໍ່ໂດຍກົງກັບພາກສ່ວນດຽວກັນນັ້ນຂອງຊັ້ນຕ່ຳໂລດ (ຄືວ່າຄະນະຈັດຕັ້ງຊັ້ນສູງໄປຕິດຕໍ່ກັບຄະນະຈັດຕັ້ງຊັ້ນລຸ່ມ ຄະນະໂຄສະນາຊັ້ນສູງໄປຕິດຕໍ່ກັບຄະນະໂຄສະນາຊັ້ນລຸ່ມ ແລະ ອື່ນໆ) ເຮັດແນວນັ້ນ ແມ່ນພາກສ່ວນໃດນຳພາສ່ວນນັ້ນໂດຍກົງໂດຍຜູ້ຮັບຜິດຊອບທົ່ວໄປໃນອົງການນຳພາຊັ້ນລຸ່ມຄືເລຂາ, ປະທານ, ຫົວໜ້າ ແລະອື່ນໆບໍ່ຮູ້ຈັກ ຫຼື ບໍ່ຮັບຜິດຊອບນຳໄດ້.

ຕ້ອງໃຫ້ຜູ້ຮັບຜິດຊອບທົ່ວໄປ ແລະ ບັນດາຜູ້ທີ່ຮັບຜິດຊອບແຕ່ລະພາກສ່ວນຊັ້ນລຸ່ມຮູ້ຈັກນຳ ແລະ ຮັບຜິດຊອບນຳກັນ ຈຶ່ງເປັນການຖືກຕ້ອງ. ວຽກການອັນໜຶ່ງຕ້ອງແມ່ນຜູ້ຮັບຜິດຊອບທົ່ວໄປເປັນຜູ້ບັນຊາ ແລະ ພະນັກງານຫຼາຍຄົນ ຫຼື ທັງໝົດພ້ອມກັນອອກແຮງເຮັດ, ເຮັດແນວນັ້ນຈຶ່ງຈະຫຼີກເວັ້ນຄຳຜິດໃນການບໍ່ຮັບຜິດຊອບຂອງພະນັກງານນັ້ນໄດ້ ແລະ ຈຶ່ງຈະເຮັດໃຫ້ໝົດທຸກຄົນລ້ວນແຕ່ເປັນພະນັກງານກັບວຽກງານອັນນັ້ນນຳກັນໝົດ.

ອ່ານຕໍ່ສະບັບໜ້າ...



# ຂຽນຄຳລາວໃຫ້ຖືກ

**#ຄູແສງ**

| ຖືກ | ຜິດ |
|---|---|
| ຫົວຂ່າ | ຫົວຄ່າ |
| ຄຸນຄ່າ | ຄຸນຂ່າ |
| ສຸຂະພາບ | ສຸຄະພາບ |
| ສຸຄະຕິ | ສຸຂະຕິ |
| ຂັດຂ້ອງ | ຄັດຂ້ອງ |
| ຄັດເລືອກ | ຂັດເລືອກ |
| ຂັບຂີ່ | ຄັບຂີ່ |
| ຄັບແຄບ | ຂັບແຄບ |
| ຊຸລົງ | ຊຸລົງ |
| ຄຸເຂົ່າ | ຂຸເຂົ່າ |



## ສຸກສະບາຍທາຍໂລດ

# ຄຸນປະໂຫຍດຂອງດອກດາວເຮືອງ

ໂດຍ: ທິວກະທິ



ຫຼາຍໆທ່ານອາດຈະຄິດວ່າດອກດາວເຮືອງເປັນພຽງດອກໄມ້ທີ່ໃຫ້ຄວາມສວຍງາມ, ເອົາໄວ້ສຳລັບບູຊາ ແລະ ປະດັບເອ້ເທົ່ານັ້ນ ແຕ່ທ່ານຮູ້ບໍ່ວ່າ ດອກດາວເຮືອງຍັງສາມາດນຳມາເຮັດເປັນຊາດື່ມ, ປຸງແຕ່ງອາຫານ ແລະ ເປັນຢາປິ່ນປົວພະຍາດບາງຊະນິດໄດ້ອີກດ້ວຍ ແຕ່ມື້ນີ້, ເຮົາຈະມານຳສະເໜີຂັ້ນຕອນໃນການນຳດອກດາວເຮືອງມາຜະລິດເປັນຊາເພື່ອດື່ມ ໂດຍນຳເອົາດອກດາວເຮືອງມາລ້າງໃຫ້ສະອາດ, ນຳໄປຕາກແດດໃຫ້ແຫ້ງ, ນຳມາຂົ້ວ ຫຼື ອົບແຫ້ງ ເພື່ອສາມາດເກັບໄວ້ໄດ້ດົນ, ມ້ຽນໃສ່ຂວດແກ້ວ ຫຼື ກະປຸກ ແລ້ວປິດຝາໃຫ້ແໜ້ນໆ.

**ວິທີການຊົງດື່ມ:**

ນຳດອກດາວເຮືອງແຫ້ງປະມານ 1-2 ດອກ ຫຼື ພໍຍຸບມືໃສ່ໃນຈອກນ້ຳແລ້ວຖອກນ້ຳຮ້ອນທີ່ກຽມໄວ້ສຳລັບຊົງຊາລົງໄປ ແລ້ວປະໄວ້ປະມານ 15-20 ນາທີແລ້ວດື່ມ.

ຄຸນປະໂຫຍດຕາມຕຳລາຢາ: ດອກດາວເຮືອງສາມາດບຳລຸງສາຍຕາໄດ້ດີ, ຟອກເລືອດ, ລະລາຍຂີ້ກະເທີ, ຂັບລົມ, ແກ້ຮ້ອນໃນ, ເຕົ້ານົມອັກເສບ, ແກ້ອາການເຈັບຫົວ; ນອກຈາກນັ້ນ, ກໍຍັງແກ້ໄອ ແລະ ໄຂ້ຫວັດນຳອີກ; ພິເສດໄປກວ່ານັ້ນ, ຍັງສາມາດນຳມາເປັນອາຫານໃນຄົວເຮືອນໄດ້ອີກ ໂດຍໃຊ້ດອກດາວເຮືອງທີ່ກຳລັງຈູມນຳມາລວກຈ້ຳແຈ່ວ, ດອກບານນຳມາຂົ້ວປະສົມກັບຊີ້ນສັດ ຫຼື ຈຸ່ມແປ້ງແລ້ວຈືນ ທ່ານກໍຈະໄດ້ອາຫານຫວ່າງຈານເດັດ ທີ່ມີປະໂຫຍດຕໍ່ຮ່າງກາຍ ແລະ ແຊບໄປອີກແບບ.

**ຂໍ້ມູນຈາກ:**
**www.kidork.com**






## ຂຶ້ນສານ

**(ເນື່ອງໃນວັນລັດຖະທຳມະນູນ ຄົບຮອບ 33 ປີ)**

**# ດອນຊ້ອນ ດອນໂຂງ**

❈ ສານນີ້ຕັ້ງທ່ຽງໝັ້ນ
ເອີ້ນວ່າສານປະຊາຊົນ
ບໍ່ແມ່ນພັນສານເຕ້ຍ
ສານຍຸຕິທຳທ່ຽງແທ້

ພັນຜູກໂຄງບິນ
ວ່າຄະດີຊາວບ້ານ
ສານກະບຸງສານກະຕ່າ
ສະພາຕັ້ງໃຫ້ວ່າຄວາມ

❈ ໃຜຫາກຄາຂອດຄ້າງ
ຂໍຈົ່ງໄປຍັງສານ
ຄູ່ຄວາມໄຂຂານເອີ້ນ
ໂຈດເປັນຄົນກ່າວຟ້ອງ

ທາງຂອດຄະດີຄວາມ
ເພື່ອກຽມການຟ້ອງ
ເປັນຈຳເລີຍທັງໂຈດ
ຈຳເລີຍແກ້ຂໍ້ກ່າວຫາ

❈ ຂໍ້ຂັດແຍ່ງທີ່ຄ້າງ
ດຳເນີນການໃນສານ
ພິພາກສາຕາມເນື້ອ
ແຍງກົດໝາຍຖືກຕ້ອງ ຂໍ້ມູນມີບ່ອນອ້າງ

ໄກ່ເກ່ຍບໍ່ເປັນຜົນ
ໃຫ້ໂປ່ງໃສຈະແຈ້ງ
ໃນຄະດີຂັດແຍ່ງ
ຈຶ່ງຕັດຊີ້ສັ່ງການ

❈ ສາມັນຊົນກ່າວໄວ້
ຂັ້ນຕອນເໝືອນວົງຈອນ
ຕາມລວງແລວວາງໄວ້
ຕັດວົງຈອນບໍ່ໄດ້

ຂຶ້ນສານວ່າຄະດີຄວາມ
ແລ່ນໄຫຼໄປເລື້ອຍ
ໃຜມາລຸນໃຜມາກ່ອນ
ເພາະເປັນເລື້ອງລະບຽບການ

❈ ທຸກທ່ານທີ່ກ່ຽວຂ້ອງ
ອາໄສກົດໝາຍອີງ
ຕ້ອງນັບຖືສານໄວ້
ຄຳຕັດສິນຫລືພິພາກສາວ່ານັ້ນ

ຫວັງເພິ່ງທາງສານ
ພິພາກສາຈະແຈ້ງ
ຈິງໃຈບໍ່ອຽງເອ່ນ
ສອງກໍຳຕ້ອງນັບຖື ແທ້ເດີ

❈ ຖ້າວ່າຍັງຂອດຄ້າງ
ຂໍ້ມູນມີ
ສາມາດອຸທອນໄດ້
ຄຳພິພາກສາ ຫາກຍັງຄືຜ່ານພົ້ນ

ຄຶງຢູ່ໃນໃຈ
ໃໝ່ມາອີງອ້າງ
ໄປຍັງສານສູງກວ່າ
ຄວນສຸດສົ່ງເລື່ອງອຸທອນ ລະເດີ!






## ຜ່ອນຄາຍ ສະບາຍ

*(ເລື່ອງເບົາໆ ເວົ້າແບບກັນເອງ ບໍ່ເຄັ່ງພິທີການ)*

**# ສ້ຽມທ້ຽນ**

❈ **ຮ່ວມເຊີດຊູ** ວັນປະກາດໃຊ້ລັດຖະທຳມະນູນ ຄົບຮອບ **33 ປີ (15 ສິງຫາ 1991-15 ສິງຫາ 2024)** ແລະ ໃນເດືອນທີ່ຜ່ານມາ ສ້ຽມທ້ຽນພ້ອມເພື່ອນຮ່ວມງານ ໄດ້ມີໂອກາດເຂົ້າຮ່ວມການປະເມີນການຈັດຕັ້ງປະຕິບັດ**ລັດຖະທຳມະນູນ ສະບັບປີ 2015** ໂດຍຕິດຕາມຄະນະໄປຂອບເຂດທົ່ວປະເທດ ເປັນລະບອບຄຶກຄື້ນ ຄຽງຄູ່ກອງປະຊຸມສະໄໝສາມັນ ທັງຕີລາຄາສະເໜີ ປັບປຸງປັບແກ້ ກົດໝາຍແມ່ລາວນັ້ນ ຕາມສະພາບການປ່ຽນແປງໃໝ່ ເພື່ອປອງຊົນລາວທົ່ວປະເທດໄດ້ ຮ່ວມໃຊ້ຮັດກຸມ **ຂອບແລ້ວ!**

❈ **ຂໍ**ເປັນກຳລັງໃຈໃຫ້ພໍ່ແມ່ປະຊາຊົນລາວບັນດາເຜົ່າ ທີ່ໄດ້ຮັບຜົນກະທົບຈາກ**ເຫດການນ້ຳຖ້ວມ** ໃນຂອບເຂດທົ່ວປະເທດຢູ່ຫຼາຍພື້ນທີ່ ພາໃຫ້ເກີດມີຄວາມເສຍຫາຍຫຼາຍສົມຄວນ ຈຶ່ງຂໍຊຽນຂໍ້ຂໍ້ ຄວາມສົ່ງມາຫາ ພໍ່ແມ່ປອງປະຊາ ທົ່ວຫາປີແດ້ວນ ຂໍຈົ່ງອົດທົນສູ້ ກັບອຸປະສັກຍິ່ງໃຫຍ່ ຂໍໃຫ້ໄພຜ່ານພົ້ນ ເຮົາທຸກຄົນຊ່ວຍຊອາບ ໃຫ້ລາວພົ້ນຜ່ານໄພ **ທ່ານເອີຍ!**

## ຊວນຍິ້ມ

*# ແອ່ນຕຸ້ງ*

### ເລື່ອງ: ການລົງທຶນທີ່ຜິດພາດ

ມີຜົວເມຍຄູ່ໜຶ່ງກຳລັງຖົກຖຽງກັນ ເລື່ອງການຊື້-ຂາຍຄ່າ ຜູ້ເປັນເມຍໄດ້ບອກໃຫ້ຜົວຂາຍຄ່າ ທີ່ຊື້ 25 ລ້ານກີບໃນປີກາຍ ເພາະຢ້ານລາຄາຄ່າຊົງຫຼຸດລົງຕື່ມແຕ່ຜູ້ເປັນຜົວບໍ່ຂາຍ ເພາະຄິດວ່າຄ່າຊີຂຶ້ນຮອດ 30 ລ້ານກີບຄືຕົ້ນປີຜ່ານມາ ຜູ້ເປັນເມຍຈຶ່ງຮ້າຍຂຶ້ນວ່າ: "ການລົງທຶນທີ່ຜິດພາດໃນຊີວິດຂອງມຶງໄອ້ສະບັກໂງ່" ເມື່ອເມຍເວົ້າແບບນັ້ນ ຜູ້ເປັນຜົວກໍຍ່າງໄປກອດເມຍ....



## ຄະຕິເຕືອນໃຈ

*#ດອກຫຍ້າ*

ຖືກໃສ່ຮ້າຍ ຍິ່ງຕ້ອງເພີ່ມສັດທາ
ຖືກອິດສາ ຍິ່ງຕ້ອງໃຫ້ໄດ້ດີບດີ
ຖືກໂຈມຕີ ຍິ່ງຕ້ອງເດັ່ນໂດ່ງດັງ
ຖືກຊິງຊັງ ຍິ່ງຕ້ອງຈະເລີນຂຶ້ນເລື້ອຍ

ລັດຖະສະພາຕ່າງປະເທດ

## ສະພາແຫ່ງຊາດຕວັກກີ ຜ່ານກົດໝາຍ ອະນຸຍາດໃຫ້ກຳຈັດໝາພະເນຈອນ




ວັນອັງຄານທີ 30 ກໍລະກົດຜ່ານມາ, ສະພາແຫ່ງຊາດຕວັກກີ ໄດ້ຮັບຮອງເອົາຮ່າງກົດໝາຍທີ່ມີຈຸດປະສົງເພື່ອແກ້ໄຂບັນຫາຈຳນວນປະຊາກອນໝາພະເນຈອນ (stray) ທີ່ກຳລັງເພີ່ມຂຶ້ນໃນປະເທດ ເຊິ່ງເປັນມາດຕະການທີ່ລວມເອົາການຂ້າ ຫຼື ເຮັດໃຫ້ເສຍຊີວິດຢ່າງສະຫງົບ (euthanasia) ເປັນທາງເລືອກສຸດທ້າຍ.

ກົດໝາຍທີ່ໄດ້ຮັບການສະໜັບສະໜູນຈາກພັກຍຸຕິທຳ ແລະການພັດທະນາຂອງປະທານາທິບໍດີ ເຣເຊບ ເທຢິບ ເອີໂດກັນ (Recep Tayyip Erdogan) ຜ່ານການຮັບຮອງເອົາດ້ວຍຄະແນນ 275 ສຽງເຫັນດີ ແລະ 224 ສຽງຄັດຄ້ານ (ສະພາແຫ່ງຊາດຕວັກກີ ມີ 600 ທີ່ນັ່ງ).

ຮ່າງກົດໝາຍດັ່ງກ່າວ ຮຽກຮ້ອງໃຫ້ເທດສະບານ ຈັບ ແລະ ໃຫ້ທີ່ພັກອາໄສແກ່ສັດພະເນຈອນ, ແຕ່ອະນຸຍາດໃຫ້ມີການເຮັດໃຫ້ເສຍຊີວິດຢ່າງສະຫງົບໄດ້ ສຳລັບໝາທີ່ຖືວ່າເປັນອັນຕະລາຍ, ເຈັບປ່ວຍ ຫຼື ມີພຶດຕິກຳຮຸກຮານ.

ຕວັກກີ ມີໝາພະເນຈອນ ປະມານ 4 ລ້ານໂຕ, ບັນດາຜູ້ສະໜັບສະໜູນກົດໝາຍກ່າວເຖິງຄວາມເປັນຫ່ວງກ່ຽວກັບການຖືກໂຈມຕີ, ອຸບັດເຫດຈະລາຈອນ ແລະ ພະຍາດໝາວໍ້ (rabies).

**ແຫຼ່ງຂ່າວ: ຊິນຮວາ**

## ກີເນ: ຮ່າງລັດຖະທຳມະນູນສະບັບໃໝ່ ສົ່ງເຖິງຮັກສາການປະທານາທິບໍດີ

ທ້າຍເດືອນກໍລະກົດຜ່ານມາ, ທ່ານ ດານຊາ ຄູຣູມາ (DansaKourouma) ປະທານສະພາໄລຍະຂ້າມຜ່ານແຫ່ງຊາດກີເນ (National Transitional Council of Guinea) ໄດ້ສະເໜີຮ່າງລັດຖະທຳມະນູນສະບັບເບື້ອງຕົ້ນ ຕໍ່ທ່ານ ມາມາດີ ດູມບູຢາ (Mamady Doumbouya) ຮັກສາການປະທານາທິບໍດີເພື່ອຂໍຄຳແນະນຳກ່ອນຈະນຳສະເໜີລົງປະຊາມະຕິລະດັບຊາດ.



ຮ່າງດັ່ງກ່າວ ເຊິ່ງລວມເອົາຄວາມຄິດເຫັນຂອງຊາວກີເນທີ່ຮ່ວມອະພິປາຍ ແລະ ປຶກສາຫາລືຫຼາຍກວ່າ 2 ປີລະບຸວ່າ: ປະທານາທິບໍດີ ຈະດຳລົງຕຳແໜ່ງເປັນເວລາ 5 ປີ, ຕໍ່ອາຍຸການໄດ້ພຽງຄັ້ງດຽວ; ສ່ວນສະພາແຫ່ງຊາດ ແລະ ສະພາສູງ ຈະດຳລົງຕຳແໜ່ງເປັນເວລາ 5 ແລະ 6 ປີ ຕາມລຳດັບ.

ຮ່າງລັດຖະທຳມະນູນສະບັບເບື້ອງຕົ້ນ ຍັງໄດ້ລະບຸເຖິງຄວາມເປັນເອກະລາດຂອງອົງການຕຸລາການ; ການແບ່ງແຍກອຳນາດບໍລິຫານ, ນິຕິບັນຍັດ ແລະ ຕຸລາການ ລວມທັງການເຄົາລົບສິດທິມະນຸດ.

ຮ່າງດັ່ງກ່າວຍັງກຳນົດໃຫ້ສ້າງຕັ້ງຄະນະກຳມະການພັດທະນາແຫ່ງຊາດ ແລະ ຄະນະກຳມາທິການແຫ່ງຊາດເພື່ອການສຶກສາ ແລະ ສິດທິມະນຸດອີກດ້ວຍ.

**ແຫຼ່ງຂ່າວ: ຊິນຮວາ**

## ຄະນະກຳມະການເລືອກຕັ້ງໂມຊຳບິກ ປະກາດຄຳແນະນຳ ການລົງຄະແນນສຽງສຳລັບການເລືອກຕັ້ງເດືອນຕຸລາ




**ທິວທັດນະຄອນຫຼວງມາປູໂຕ (27/7/2023)**

ວັນທີ 7 ສິງຫາຜ່ານມາ, ຄະນະກຳມະການການເລືອກຕັ້ງແຫ່ງຊາດໂມຊຳບິກ (CNE) ໄດ້ປະກາດຕຳແໜ່ງ ຂອງພັກການເມືອງໃນບັດລົງຄະແນນສຳລັບການເລືອກຕັ້ງເດືອນຕຸລາ ໂດຍຂະບວນການປະຊາທິປະໄຕແຫ່ງໂມຊຳບິກ (MDM) ຢູ່ອັນດັບໜຶ່ງ, ແນວໂຮມປົດປ່ອຍໂມຊຳບິກ (FRELIMO) ພັກລັດຖະບານປັດຈຸບັນ ຢູ່ທີສອງ ແລະ ການຕໍ່ຕ້ານແຫ່ງຊາດໂມຊຳບິກ (RENAMO) ພັກຝ່າຍຄ້ານຕົ້ນຕໍ ຢູ່ທີສາມ.

ນອກຈາກການຈັບສະຫຼາກບັດລົງຄະແນນສຽງ (ballot draw) ແລ້ວ, ທ່ານ ໂຣດຣິເກຊ ທິມບາ (Rodrigues Timba) ຜູ້ປະສານງານດ້ານກົດໝາຍ ແລະ ຈັນຍາບັນ ຂອງ CNE ຍັງໄດ້ເປີດເຜີຍຕາຕະລາງການຈັດແບ່ງເວລາອອກອາກາດສຳລັບພັກການເມືອງທາງສື່ມວນຊົນສາທາລະນະອີກດ້ວຍ. ຕາມທີ່ທ່ານ ທິມບາ ໄດ້ຖະແຫຼງຂ່າວໃນນະຄອນຫຼວງມາປູໂຕ, ເວລາອອກອາກາດຈະເປັນລາຍອາທິດ ແລະ ໝູນວຽນ; ບໍ່ພຽງແຕ່ສຳລັບສາມພັກທີ່ມີທີ່ນັ່ງໃນສະພາແຫ່ງຊາດເທົ່ານັ້ນ, ແຕ່ຍັງລວມເຖິງພັກນອກສະພາແຫ່ງຊາດພັກອື່ນໆ ທີ່ເຂົ້າແຂ່ງຂັນໃນການເລືອກຕັ້ງທົ່ວໄປຄັ້ງທີ 7 ອີກດ້ວຍ.

ການປະກາດຕຳແໜ່ງພັກມີຂຶ້ນທ່າມກາງການກົດຂວາງແນວຮ່ວມພັນທະມິດປະຊາທິປະໄຕ (CAD) ອອກຈາກການເລືອກຕັ້ງສະພາແຫ່ງຊາດ, ສະພາແຂວງ ແລະ ເຈົ້າແຂວງ ເມື່ອບໍ່ດົນມານີ້ຕາມຄຳຕັດສິນຂອງສະພາລັດຖະທຳມະນູນ; ມີພຽງແຕ່ຜູ້ນຳ CAD ທ່ານ ເວນັນຊິໂອ ມອນເລນ (Venancio Mondlane) ເທົ່ານັ້ນທີ່ຍັງຢູ່ໃນການແຂ່ງຂັນຊິງຕຳແໜ່ງປະທານາທິບໍດີ.

ທ່ານ ເປົາໂລ ຄູນິກາ (Paulo Cuinica) ໂຄສົກຂອງ CNE ກ່າວວ່າ ການໂຄສະນາຫາສຽງຈະເລີ່ມໃນວັນທີ 24 ສິງຫາ ແລະ ດຳເນີນໄປຈົນເຖິງວັນທີ 06 ເດືອນຕຸລາ 2024.

**ແຫຼ່ງຂ່າວ: ຊິນຮວາ**

## ອິນໂດເນເຊຍ ປັບປຸງກົດໝາຍ ຫ້າມຜູ້ອາຍຸຕ່ຳກວ່າ 21 ປີ ຊື້ຢາສູບ

ສຳນັກຂ່າວ AFP ລາຍງານຈາກນະຄອນຫຼວງຈາກາຕາ ເມື່ອວັນທີ 1 ສິງຫານີ້ວ່າ, ອິນໂດເນເຊຍ ປັບເກນອາຍຸຂັ້ນຕ່ຳສຳລັບການຊື້ຢາສູບ ຈາກ 18 ຂຶ້ນເປັນ 21 ປີ ເພື່ອຄວບຄຸມພຶດຕິກຳການສູບຢາທີ່ເປັນອັນຕະລາຍໃນປະເທດເຊິ່ງມີອັດຕາການສູບຢາສູງທີ່ສຸດແຫ່ງໜຶ່ງຂອງໂລກ.

ຜົນການສຳຫຼວດໃນປີ 2021 ໂດຍອົງການອະນາໄມໂລກ (WHO) ລະບຸວ່າ ມີຜູ້ໃຫຍ່ທີ່ສູບຢາປະມານ 70 ລ້ານຄົນໃນອິນໂດເນເຊຍ ຈາກປະຊາກອນ 270 ລ້ານຄົນ (ໃນເວລານັ້ນ) ແລະ ເປັນປະເທດໜຶ່ງທີ່ຜະລິດຢາສູບລາຍໃຫຍ່ທີ່ສຸດໃນໂລກ.

ໃນກົດໝາຍສະບັບໃໝ່ທີ່ລົງນາມໃຫ້ມີຜົນບັງຄັບໃຊ້ແລ້ວ ໂດຍປະທານາທິບໍດີ ໂຈໂກ ວິໂດໂດ (Joko Widodo) ອາຍຸຂັ້ນຕ່ຳສຳລັບຜູ້ທີ່ຕ້ອງການຊື້ຢາສູບຖືກຍົກຂຶ້ນມາເປັນ 21 ປີ ແລະ ຫ້າມຂາຍຢາສູບກອກດຽວ ເຊິ່ງເປັນທາງເລືອກລາຄາຖືກທີ່ພົບເຫັນທົ່ວໄປໃນຮ້ານຄ້າຂ້າງທາງ ໂດຍມີຈຸດປະສົງເພື່ອຫຼຸດອັດຕາການສູບຢາແລະປ້ອງກັນບໍ່ໃຫ້ຄົນສູບຢາຕັ້ງແຕ່ອາຍຸຍັງນ້ອຍ.

ກະຊວງສາທາລະນະສຸກອິນໂດເນເຊຍເປີດເຜີຍຜົນການສຳຫຼວດເມື່ອປີ 2023 ວ່າ 7.4 ເປີເຊັນຂອງຈຳນວນຜູ້ສູບຢາທັງໝົດ 70 ລ້ານຄົນ ມີອາຍຸລະຫວ່າງ 10-18 ປີ ແລະ ຜູ້ທີ່ມີອາຍຸລະຫວ່າງ 15-19 ປີ ແມ່ນກຸ່ມທີ່ສູບຢາຫຼາຍທີ່ສຸດ.



# ເບິ່ງໄວ້ ໄດ້ບົດຮຽນ

❖ ວິເສດ ສະແຫວງສຶກສາ

## ຂ່າວໜ້າສົນໃຈ ຄວນເບິ່ງໄວ້ເປັນບົດຮຽນ

ບົດນີ້ສັງລວມເອົາເລື່ອງທີ່ໜ້າສົນໃຈມາເລົ່າໃຫ້ຟັງຄື: ໜຶ່ງແມ່ນວິທີການຄຸ້ມຄອງພະລັງງານໄຟຟ້າຢູ່ປະເທດກຳປູເຈຍ ແລະ ສອງແມ່ນຂ່າວກ່ຽວກັບການໂຈລະກຳຂໍ້ມູນທີ່ນິຍົມກັນເອີ້ນວ່າ "ແຮັກ" ຂໍ້ມູນທີ່ເກີດຂຶ້ນຢູ່ປະເທດອິນໂດເນເຊຍ ຫວ່າງບໍ່ດົນມານີ້. ເລື່ອງທີ່ໜຶ່ງທີ່ຄວນເບິ່ງໄວ້ເປັນບົດຮຽນນັ້ນແມ່ນກ່ຽວກັບທາງການຂອງກຳປູເຈຍ ໄດ້ປະກາດໃຊ້ລະບຽບການກ່ຽວກັບການຄຸ້ມຄອງການນຳໃຊ້ພະລັງງານໄຟຟ້າຈາກແສງຕາເວັນ ເຊິ່ງເປັນແຫຼ່ງພະລັງງານສະອາດທີ່ພວມມາແຮງແຊງໜ້າແຫຼ່ງພະລັງງານດັ່ງເດີມເຊັ່ນ: ພະລັງງານໄຟຟ້າຈາກຖ່ານຫີນ, ຈາກເຄື່ອງຈັກທີ່ໃຊ້ນ້ຳມັນ.

ຂ່າວບອກວ່າໃນວັນທີ 8 ກໍລະກົດປີນີ້, ລັດວິສາຫະກິດໄຟຟ້າກຳປູເຈຍ ໄດ້ອອກລະບຽບການໃໝ່ໃຫ້ຜູ້ທີ່ຕິດຕັ້ງລະບົບຜະລິດພະລັງງານຈາກແສງຕາເວັນ (ໂຊລາເຊວ) ໃສ່ເທິງຫຼັງຄາ ທີ່ມີກຳລັງການຜະລິດເກີນ 10 ກິໂລວັດ ຕ້ອງເຮັດພັນທະຈ່າຍຄ່ານຳໃຊ້ໄຟຟ້າ. ລະບຽບການນີ້ເນັ້ນເກັບໄຟຟ້າໃນໂຮງງານອຸດສາຫະກຳ, ສະຖານທີ່ປະກອບການທຸລະກິດ, ໂຮງແຮມ ຫຼື ອາຄານຂະໜາດໃຫຍ່ ເຊິ່ງຕ້ອງການຕິດຕັ້ງລະບົບພະລັງງານແສງຕາເວັນຂະໜາດກາງ ແລະ ຂະໜາດໃຫຍ່. ລະບຽບການນີ້ ມາພ້ອມໆກັບມາດຕະການລົງໂທດຕໍ່ຜູ້ລະເມີດເຊັ່ນ: ຜູ້ທີ່ບໍ່ຍອມຂຶ້ນທະບຽນການຕິດຕັ້ງລະບົບພະລັງງານໄຟຟ້າແສງຕາເວັນ ກັບທາງການທີ່ກ່ຽວຂ້ອງ. ນັບແຕ່ເດືອນທັນວາ2023 ຮອດປັດຈຸບັນ, ຈຳນວນຜູ້ນຳໃຊ້ພະລັງງານໄຟຟ້າແສງຕາເວັນນັ້ນ ໄດ້ເພີ່ມຂຶ້ນຢ່າງຫຼວງຫຼາຍ ແຕ່ຈຳນວນຜູ້ຂຶ້ນທະບຽນການຕິດຕັ້ງລະບົບນັ້ນ ມີພຽງ 94 ກໍລະນີເທົ່ານັ້ນ. ພາຍໃຕ້ກົດລະບຽບນີ້, ຜູ້ທີ່ຕິດຕັ້ງລະບົບຜະລິດພະລັງງານຊະນິດນີ້ ທີ່ບໍ່ເກີນ 10 ກິໂລວັດ ຈະບໍ່ຈຳເປັນຕ້ອງຊຳລະຄ່າຊົມໃຊ້ໄຟຟ້າ; ດັ່ງນັ້ນ, ກວ່າ 95% ຂອງຄົວເຮືອນ ແລະ ສະຖານທີ່ປະກອບການທຸລະກິດຈຶ່ງຈະບໍ່ໄດ້ຮັບຜົນກະທົບຈາກມາດຕະການໃໝ່ນີ້. ສ່ວນຜູ້ທີ່ຕິດລະບົບໄວ້ຫຼັງຄາລ້າໆ ແຕ່ບໍ່ໄດ້ນຳໃຊ້ຕົວຈິງ ກໍຈະບໍ່ມີພັນທະເສຍຄ່າເຊັ່ນກັນ; ຂ່າວໄດ້ໃຫ້ລາຍລະອຽດຕື່ມວ່າ ແຜ່ນໂຊລາເຊວຂະໜາດກາງ ຈຳນວນ 20 ແຜ່ນ ຫຼື ຂະໜາດໃຫຍ່ ຈຳນວນ 16 ແຜ່ນ ຈະມີການຜະລິດພະລັງງານໄດ້ບໍ່ເກີນ 10 ກິໂລວັດ.

ຢູ່ປະເທດລາວພວກເຮົາ, ການນຳໃຊ້ພະລັງງານໄຟຟ້າສະອາດຊະນິດນີ້ໄດ້ເພີ່ມຂຶ້ນ ແລະ ຍັງມີແຜນຜະລິດພະລັງງານໄຟຟ້າແຮງລົມຕື່ມ. ດັ່ງນັ້ນ, ຈຶ່ງຄວນມີຂໍ້ກຳນົດກ່ຽວກັບການນຳໃຊ້ພະລັງງານສະອາດນີ້ຢ່າງເໝາະສົມເພື່ອເປັນການຊຸກຍູ້ການນຳໃຊ້ພະລັງງານທີ່ເປັນມິດກັບສິ່ງແວດລ້ອມ. ແນ່ນອນກໍຕ້ອງໃຫ້ມີລາຄາຖືກກວ່າຄ່າໄຟຟ້າ ຈາກເຂື່ອນ ຈາກຖ່ານຫີນ ແລະ ຈາກເຄື່ອງຈັກທີ່ໃຊ້ນ້ຳມັນ.

ຂໍປິດທ້າຍບົດນີ້ດ້ວຍເລື່ອງສັ້ນໆ ແຕ່ເຜັດມັນ, ມັນເປັນເຫດການທີ່ຄ້າຍໆກັບເລື່ອງຕະຫຼົກ ແຕ່ພັດເຮັດໃຫ້ທາງການອິນໂດເນເຊຍໜັກເອິກຍ້ອນ. ເຫດການນີ້ຖືກເປີດເຜີຍໂດຍລັດຖະມົນຕີກະຊວງສື່ສານ ແລະ ຂໍ້ມູນອິນໂດເນເຊຍ ວ່າ: ສູນຂໍ້ມູນແຫ່ງຊາດ ໄດ້ຖືກໂຈມຕີໂດຍກຸ່ມແກ໊ງແຮັກເກີ ທີ່ມີຄວາມບັງອາດມາດຮ້າຍທີ່ສຸດ ຄືບໍ່ພຽງແຕ່ໂຈມຕີ ຫຼື ແຮັກຂໍ້ມູນ ແຕ່ຍັງໄດ້ລ໋ອກຝາຍຂໍ້ມູນທັງໝົດໄວ້ເພື່ອແລກກັບຄ່າໄຖ່ ເປັນເງິນ 8 ລ້ານໂດລາສະຫະລັດ, ການໂຈມຕີທາງໄຊເບີດັ່ງກ່າວໄດ້ເຮັດໃຫ້ລະບົບການບໍລິການຂໍ້ມູນໃນອົງການຂອງລັດລະດັບຊາດ ແລະ ພາກພື້ນຖືກລົບກວນ ນັບແຕ່ວັນທີ 20 ມິຖຸນາເປັນຕົ້ນມາ. ຂ່າວບອກວ່າ ທາງການອິນໂດເນເຊຍເດັດຂາດຈະບໍ່ຍອມເສຍຄ່າໄຖ່ ແຕ່ຈະເພີ່ມມາດຕະການປ້ອງກັນ ແລະ ກຳຈັດມານຮ້າຍທາງໄຊເບີເຫຼົ່ານີ້ໃຫ້ໝົດໄປ.

ທະນາຄານພັດທະນາລາວ
LDB Bank

ຄະນະກຳມະການລະດັບຊາດ
ປັບປຸງລັດຖະທຳມະນູນ
ລັດຖະທຳມະນູນ

ຂໍເຊີນຊວນບັນດາທ່ານພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ, ນັກຮຽນ, ນັກສຶກສາ, ປັນຍາຊົນ, ກຳມະກອນ, ຊາວຜູ້ອອກແຮງງານ, ພໍ່ແມ່ພີ່ນ້ອງປະຊາຊົນລາວບັນດາເຜົ່າໃນທົ່ວປະເທດ ແລະ ພີ່ນ້ອງຊາວລາວທີ່ອາໄສຢູ່ຕ່າງປະເທດ ຈົ່ງປະກອບຄວາມຄິດເຫັນຕໍ່ການປັບປຸງລັດຖະທຳມະນູນ ສະບັບປີ 2015 ເຊິ່ງຄະນະຮັບຜິດຊອບໄດ້ຈັດຕັ້ງໜ່ວຍງານຮັບຄວາມຄິດເຫັນ, ຂໍ້ສະເໜີຜ່ານອີເມວ: laocon@nalao.la




## ທັງເຜົາ ທັງຝັງ

*# ບ່າວກະບື*

**ຍິງ**ຄົນໜຶ່ງໄດ້ຮັບໂທລະເລກແຈ້ງໃຫ້ຊາບ ກ່ຽວກັບການຕາຍຂອງຜົວນາງ ໃນອ້ອມກອດຂອງຍິງຄົນໜຶ່ງທີ່ເຮືອນພັກ. ເຈົ້າຂອງເຮືອນຖາມວ່າ ຊິໃຫ້ຈັດການແນວໃດກັບຄົນຕາຍ ຊິໃຫ້ຝັງ ຫຼື ເຜົາ. ນາງເມຍຕອບຄືນໄປວ່າ: "ກະລຸນາເຜົາສົບ-ສ່ວນເສດກະດູກທັ້ນໃຫ້ຝັງດິນ".

## Cremate & Bury

*# BAOKBU*

A wonan received a telegram from abroad informing her about her husband's death at a guest house in a woman's arms. The guest house owner enquired whether he should be buried or cremated. The wife replied: "Please burn the body and bury ashes."

### ຕີລາຄາ...

(ຕໍ່ຈາກໜ້າ 1)

ຫຼຸບຕີລາຄາຜົນການປະເມີນການຈັດຕັ້ງປະຕິບັດລັດຖະທຳມະນູນ ສະບັບປີ 2015 ຢູ່ 5 ຈຸດອ້ອມຂ້າງສູນກາງ ແລະ 18 ແຂວງ-ນະຄອນຫຼວງວຽງຈັນ ຕິດພັນກັບກອງປະຊຸມສະໄໝສາມັນຂອງສະພາປະຊາຊົນຂັ້ນແຂວງ ເຊິ່ງເລີ່ມຈັດຕັ້ງປະເມີນແຕ່ວັນທີ 20 ມິຖຸນາ ຫາ ວັນທີ 30 ກໍລະກົດ 2024 ເປັນຕົ້ນມາ, ຮັບຟັງການລາຍງານການເຄື່ອນໄຫວຂອງອະນຸກຳມະການຕ່າງໆ ແລະ ກອງເລຂາ; ນອກຈາກນັ້ນ, ຍັງໄດ້ປຶກສາຫາລືວຽກງານສຳຄັນຈຳນວນໜຶ່ງກ່ຽວກັບການປັບປຸງລັດຖະທຳມະນູນ ແລະ ການຈັດກອງປະຊຸມວິທະຍາສາດ.

ທ່ານ ປອ. ໄຊສົມພອນ ພົມວິຫານ ໄດ້ສະເໜີໃຫ້ບັນດາທ່ານທີ່ເຂົ້າຮ່ວມ ຈົ່ງຍົກສູງຄວາມຮັບຜິດຊອບໃນການຄົ້ນຄວ້າ, ປະກອບຄວາມເຫັນໃຫ້ເລິກເຊິ່ງ ແລະ ຕີກລົງບັນຫາຕ່າງໆຢ່າງມີປະສິດທິພາບ, ປະສິດທິຜົນ ໃນນັ້ນ, ໃຫ້ຕີລາຄາບົດສະຫຼຸບຜົນການປະເມີນການຈັດຕັ້ງປະຕິບັດລັດຖະທຳມະນູນ ສະບັບປີ 2015 ຢູ່ 5 ຈຸດ ອ້ອມຂ້າງສູນກາງ ແລະ 18 ແຂວງ-ນະຄອນຫຼວງ; ບັນດາຂໍ້ສະດວກ ແລະ ຫຍຸ້ງຍາກໃນການເຄື່ອນໄຫວຂອງອະນຸກຳມະການຕ່າງໆ; ເອົາໃຈໃສ່ຄົ້ນຄວ້າ, ວິເຄາະ-ວິໄຈ ບັນດາຄຳເຫັນທີ່ໄດ້ຈາກການທາບທາມຢູ່ 5 ຈຸດອ້ອມຂ້າງສູນກາງ ແລະ 18 ແຂວງ-ນະຄອນຫຼວງ ເພື່ອສັງລວມເອົາຄຳເຫັນໃສ່ຮ່າງລັດຖະທຳມະນູນ ສະບັບປັບປຸງ ໃຫ້ມີເນື້ອໃນຄົບຖ້ວນສົມບູນຍິ່ງໆຂຶ້ນ. ຫຼັງຈາກນັ້ນ, ຈຶ່ງລາຍງານຕໍ່ກອງປະຊຸມກົມການເມືອງສູນກາງພັກມີທິດຊີ້ນຳ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດໃນຕໍ່ໜ້າ.

**(ນາງ ປາກາລັກ ພົມມີໄຊ)**

### ກອງປະຊຸມ...

(ຕໍ່ຈາກໜ້າ 1)

the Role of Parliaments in Addressingthe Drug Matters for a Drug - Free ASEAN Realization) ໂດຍການເປັນເຈົ້າພາບຂອງ ສປປ ລາວ ໄດ້ໄຂຂຶ້ນຢ່າງເປັນທາງການໃນວັນທີ 7 ສິງຫາ 2024 ທີ່ໂຮງແຮມຫຼວງພະບາງວິວ, ນະຄອນຫຼວງພະບາງ ໂດຍການເປັນປະທານຂອງທ່ານ ຄຳໃບ ດຳລັດ ຮອງປະທານສະພາແຫ່ງຊາດ, ຕາງໜ້າປະທານກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນຫຼືໄອປາຄັ້ງທີ45; ເຂົ້າຮ່ວມມີບັນດາປະເທດສະມາຊິກລັດຖະສະພາລະຫວ່າງຊາດອາຊຽນ ຄື: ບຣູໄນ, ກຳປູເຈຍ, ອິນໂດເນເຊຍ, ມາເລເຊຍ, ຟີລິບປິນ, ສິງກະໂປ, ໄທ, ຫວຽດນາມ ແລະ ຕາງໜ້າຈາກລັດຖະສະພາມຽນມາ, ເລຂາທິການໃຫຍ່ໄອປາ ແລະ ກອງເລຂາໄອປາ, ບັນດາອົງການຈັດຕັ້ງທີ່ກ່ຽວຂ້ອງ ເຊັ່ນ: ກອງປະຊຸມເຈົ້າໜ້າທີ່ອາວຸໂສອາຊຽນ ກ່ຽວກັບບັນຫາຢາເສບຕິດ (ASEAN Senior Officials Meeting on Drug Matters - ASOD) ແລະ ອົງການສະຫະປະຊາຊາດ ເພື່ອຄວບຄຸມຢາເສບຕິດ (UNODC) ແລະ ບັນດາແຂກທີ່ຖືກເຊີນ.

ໃນພິທີເປີດກອງປະຊຸມ, ທ່ານ ຄຳຂັນ ຈັນທະວິສຸກ ເຈົ້າແຂວງໆຫຼວງພະບາງ ໄດ້ກ່າວຕ້ອນຮັບຄະນະຜູ້ແທນ, ທ່ານ ນາງ ຊິຕິ ໂຣໄຊເມຣິຍັນຕີ ດາໂຕະ ຮາຈິ ອັບດຸນ ຣາມັນ (Siti Rozaimeriyanty Dato Haji Abdul Rahman) ເລຂາທິການໃຫຍ່ໄອປາ ໄດ້ມີຄຳເຫັນ; ຫຼັງຈາກນັ້ນ, ທ່ານ ຄຳໃບ ດຳລັດ ໄດ້ກ່າວສູນທອນພິດເປີດກອງປະຊຸມຢ່າງເປັນທາງການ ເຊິ່ງທ່ານໄດ້ສະ ແດງຄວາມຊົມເຊີຍ ແລະ ຕີລາຄາສູງຕໍ່ການຮ່ວມມືໃນຂອບອາຊຽນ ແລະ ໄອປາໃນໄລຍະຜ່ານມາ ທີ່ໄດ້ນຳໃຊ້ກົນໄກ ແລະ ບັນດາມາດຕະການໃນການສະກັດກັ້ນ, ປາບປາມ, ຄວບຄຸມ, ແກ້ໄຂ ແລະ ທຳລາຍແຫຼ່ງການຜະລິດ, ການປຸງແຕ່ງ, ການຄ້າຂາຍ, ການລັກລອບຂົນສົ່ງ ກໍຄືການນຳໃຊ້ຢາເສບຕິດທີ່ຜິດກົດໝາຍ ເຮັດໃຫ້ບັນຫາຢາເສບຕິດຫຼຸດຜ່ອນລົງພໍສົມຄວນ ເຊິ່ງຫຼາຍປະເທດສະມາຊິກອາຊຽນ ກໍໄດ້ມີບົດຮຽນທີ່ດີໃນການປິ່ນປົວ, ບຳບັດ ແລະ ຟື້ນຟູຜູ້ໄດ້ຮັບເຄາະຮ້າຍຈາກຢາເສບຕິດ ໃຫ້ກັບມາໃຊ້ຊີວິດເປັນປົກກະຕິໃນສັງຄົມ. ສຳລັບ ສປປ ລາວ ແມ່ນໄດ້ຖືເອົາວຽກງານການແກ້ໄຂບັນຫາຢາເສບຕິດ ເປັນວຽກງານສຳຄັນ ແລະ ສະພາແຫ່ງຊາດ ໄດ້ຮັບຮອງເອົາເປັນວາລະແຫ່ງຊາດ ມາແຕ່ປີ 2021; ຜ່ານການສຸມໃສ່ຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດໃນໄລຍະປີ 2021-2023 ສາມາດສະກັດກັ້ນແລະແກ້ໄຂບັນຫາຢາເສບຕິດໄດ້ຫຼາຍກໍລະນີ. ດັ່ງນັ້ນ, ຈຶ່ງໄດ້ຕົກລົງສືບຕໍ່ຈັດຕັ້ງປະຕິບັດວາລະແຫ່ງຊາດດັ່ງກ່າວຕໍ່ໄປອີກໃນໄລຍະປີ 2024-2025 ເພື່ອເຮັດໃຫ້ບັນຫາຢາເສບຕິດຢູ່ ສປປ ລາວ ຫຼຸດລົງເທື່ອລະກ້າວ."

ການເປັນເຈົ້າພາບຈັດກອງປະຊຸມຄັ້ງນີ້ ຍັງເປັນການຍົກສູງຖານະບົດບາດຂອງສປປ ລາວ ກໍຄືບົດບາດຂອງສະພາແຫ່ງຊາດ ໃຫ້ສູງເດັ່ນຂຶ້ນໃນເວທີພາກພື້ນ ແລະ ສາກົນ, ເປັນກາລະໂອກາດອັນດີໃນການໂຄສະນາແນວທາງນະໂຍບາຍອັນຖືກຕ້ອງຂອງພັກ ແລະ ລັດຖະບານ, ເປັນການເຮັດສຳເລັດໜ້າທີ່ ແລະ ພັນທະຄວາມຮັບຜິດຊອບ ໃນຖານະທີ່ສະພາແຫ່ງຊາດລາວເປັນສະມາຊິກສົມບູນຂອງອົງການສະມັດຊາລັດຖະສະພາລະຫວ່າງຊາດອາຊຽນ ແລະ ປະຕິບັດຕາມຮອບວຽນໃນການຜັດປ່ຽນເປັນເຈົ້າພາບ; ທັງເພື່ອໂຄສະນາແຜນນະໂຍບາຍ, ລະບຽບກົດໝາຍ ແລະຍຸດທະສາດຂອງ ສປປ ລາວ ເພື່ອຕ້ານກັບບັນຫາຢາເສບຕິດ.

**(ຂ່າວ: ບຸນເກີດ ວົງໄຊຍາ,
ພາບ: ອານຸສອນ ພູມມີທອນ)**

**ຜູ້ຊີ້ນຳ**
ທ່ານ ສິງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ
ທ່ານ ຄຳຫວັນ ດາລາວົງ

**ຄະນະບັນນາທິການ**
ທ່ານ ປອ. ພິດສະໄໝ ບຸນວິໄລ ຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ

**ກອງບັນນາທິການ**
ທ່ານ ນາງ ວັນນາລິນ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ສຸພາວັນ ທອມສະນິດ
ທ່ານ ນາງ ປາກາລັກ ພົມມີໄຊ

**ອອກແບບ - ຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ